ຮ່າງ

ແຜນຍຸດທະສາດພັດທະນາຈຸດໝາຍປາຍທາງທ່ອງທ່ຽວອະນຸລັກ

ແລະແຜນປະຕິບັດ

ສຳລັບປີ 2016 - 2025

ບົດນຳ

ແຜນຍຸດທະສາດພັດທະນາຈຸດໝາຍປາຍທາງທ່ອງທ່ຽວອະນຸລັກແມ່ນສ່ວນໜຶ່ງຂອງແຜນແມ່ບົດພັດທະນາການທ່ອງທ່ຽວແຕ່ປີ 2016-2025 ທີ່ໄດ້ສ້າງຂຶ້ນໂດຍກ/ຊ ຖະແຫລງຂ່າວວັດທະນະທຳ ແລະ ທ່ອງທ່ຽວ(ກົມພັດທະນາການທ່ອງທ່ຽວ)

ແຜນຍຸດທະສາດພັດທະນາຈຸດໝາຍປາຍທາງທ່ອງທ່ຽວອະນຸລັກໄດ້ມາ:ຈາກການສຶກສາຄົ້ນຄວ້າແຜນພັດທະນາເສດຖະກິດສັງຄົມ ແລະ ນະໂຍບາຍລວມຂອງລັດຖະບານທີ່ໄດ້ກຳນົດອອກເພື່ອຂັບເຄື່ອນເສດຖະກິດສັງຄົມ(2016-2025); ຈາກແຜນແມ່ບົດພັດທະນາການທ່ອງທ່ຽວຂອງກ/ຊ ຖະແຫລ່ງຂ່າວ ແລະ ທ່ອງທ່ຽວດັ່ງກ່າວມາຂ້າງເທິງນັ້ນ ຈາກບົດຮຽນການພັດທະນາການທ່ອງທ່ຽວຂອງສປປລາວໃນຊຸມປີຜ່ານມາທີ່ມີຫລາຍຮູບແບບຊຶ່ງສາກົນຍອມຮັບແລະ ໄດ້ຮັບການຍ້ອງຍໍຈາກອົງການຈັດຕັ້ງສາກົນຕ່າງໆທີ່ກ່ຽວຂ້ອງ; ຈາກການສຶກສາຄົ້ນຄວ້າຂໍ້ມູນຂ່າວສານຂອງກົມພັດທະນາການທ່ອງທ່ຽວ ແລະ ຄວາມຕ້ອງການຂອງນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ແລະ ຈາກການຄົ້ນຄວ້າທ່າອ່ຽງຂອງການທ່ອງທ່ຽວໃນໄລຍະໃໝ່ໃນສະເພາະໜ້າແລະຍາວນານ

ແຜນຍຸດທະສາດພັດທະນາຈຸດໝາຍປາຍທາງທ່ອງທ່ອງທ່ຽວອະນຸລັກຊຸດນີ້ຈະເປັນຄູ່ມືທີ່ດີໃຫ້ວິຊາການຂະແໜງການທ່ອງທ່ຽວຂັ້ນສູນກາງ ແລະ ທ້ອງຖິ່ນເພື່ອດຳເນີນການພັດທະນາໃຫ້ເກີດປະສິດທິພາບແລະປະສິດທິຜົນ ນຳຜົນປະໂຫຍດມາໃຫ້ປະເທດຊາດເວົ້າລວມ ແລະ ທ້ອງຖິ່ນແລະປະຊາຊົນບັນດາເຜົ່າໂດຍກົງກໍຄືທາງອ້ອມໃຫ້ຫລາຍທີ່ສຸດເທົ່າທີ່ເປັນໄປ ແລະ ຫລີກເວັ້ນຜົນກະທົບດ້ານລົບທີ່ສາມາດເກີດຂຶ້ນໄດ້ໃຫ້ໜ້ອຍທີ່ສຸດເທົ່າທີ່ຄວນ

ແຜນຍຸດທະສາດພັດຈຸດໝາຍປາຍທາງທ່ອງທ່ຽວອະນຸລັກມີການພົວພັນກັບຫລາຍພາກສ່ວນຂະແໜງການລັດທີ່ກ່ຽວຂ້ອງໃນທຸກລະດັບ ພົວພັນກັບພາກສ່ວນທຸລະກິດທ່ອງທ່ຽວ ແລະ ອຸດສາຫະກຳທ່ອງທ່ຽວຢ່າງກວ້າງຂວາງ ແລະ ທຸລະກິດອື່ນໆທີ່ກ່ຽວຂ້ອງໂດຍທາງອ້ອມກໍດີ ແລະ ຕ້ອງການສະໜັບສະໜຸນຮ່ວມມືຈາກການຈັດຕັ້ງສາກົນທີ່ເປັນລັດຖະບານ ແລະ ບໍ່ເປັນລັດຖະບານ ສະຖາບັນການເງິນພາຍໃນແລະສາກົນ,ວິທະຍາໄລ ແລະ ມະຫາວິທະຍາໄລມສະຖາບັນການສຶກສາແລະອື່ນໆເພື່ອບັນລຸເປົ້າໝາຍກໍຄືຜົນສຳເລັດຂອງການພັດທະນາໃນລະດັບອັນແນ່ນອນ ແລະ ຍືນຍົງໃນທີ່ສຸດທຸກຝ່າຍ ທຸກພາກສ່ວນທີ່ກ່ຽວຂ້ອງໂດຍກົງຫລືທາງອ້ອມກໍດີຈະໄດ້ຮັບຜົນປະໂຫຍດ

ສາລະບານ

ພາກທີ I

ພາກສະເໜີ

1. ຄວາມໝາຍສຳຄັນຂອງການທ່ອງທ່ຽວລະຫວ່າງປະເທດ
2. ທ່າອ່ຽງຂອງການທ່ອງທ່ຽວລະຫວ່າງປະເທດ
3. ຄວາມອາສາມາດຂອງການທ່ອງທ່ຽວລາວ (swot analysis)
4. ຄວາມເປັນມາຂອງການທ່ອງທ່ຽວລາວ:
   4.1 ນິມິດໝາຍໃໝ່ຂອງການທ່ອງທ່ຽວລາວ
   4.2 ຈຸດປະສົງໃນການສົ່ງເສີມການທ່ອງທ່ຽວລາວ
5. ບາງບົດຮຽນທີ່ໄດ້ມາຈາກການພັດທະນາການທ່ອງທ່ຽວໃນຊຸມປີຜ່ານມາ
6. ສິ່ງທ້າທາຍໃນຕໍ່ໜ້າ(2016-2020)

ພາກທີ II

ກົນໄກດຳເນີນການພັດທະນາຈຸດໝາຍປາຍທາງທ່ອງທ່ຽວອະນຸລັກ

1. ນິຍາມຈຸດໝາຍປາຍທາງທ່ອງທ່ຽວອະນຸລັກ
2. ວິໄສທັດການພັດທະນາຈຸດໝາຍປາຍທາງທ່ອງທ່ຽວອະນຸລັກຂອງ ສປປລາວ(2016-2025)
3. ແນວທາງພັດທະນາການທ່ອງທ່ຽວອະນຸລັກຜ່ານມາ
4. ການຮ່ວມມືຈາກທຸກພາກສ່ວນແມ່ນຄວາມຈຳເປັນພາວະວິໄສ
   4.1 ສ້າງລະບົບຊີ້ນຳ ນຳພາທີ່ເປັນເອກະພາບໃນຂະແໜງການທ່ອງທ່ຽວ
   4.2 ສ້າງກົນໄກປະສານງານລະຫວ່າງຂະແໜງການລັດ-ລັດ ລັດ-ອຸດສາຫະກຳທ່ອງທ່ຽວ ແລະ ປະຊາຊົນ
   4.3 ເປີດກວ້າງການຮ່ວມມືແລະການດຳເນີນການພັດທະນາ
5. ລັກສະນະຮູບແບບການພັດທະນາຈຸດໝາຍປາຍທາງທ່ອງທ່ຽວອະນຸລັກ
   5.1 ລັກສະນະແບບວົງຈອນອ້ອມຕົວເມືອງໃດໜຶ່ງຂອງແຂວງ-ນະຄອນຫລວງ(ຕົວແບບເມືອງນ້ຳທາ-ແຂວງຫລວງນ້ຳທາ)
   5.2 ລັກສະນະແບບວົງຈອນເຊື່ອມຍົງລະຫວ່າງ 2-3 ຕົວເມືອງພາຍໃນແຂວງ-ນະຄອນຫລວງ(ຕົວແບບແຂວງຊຽງຂວາງ)
   5.3 ລັກສະນະແບບວົງຈອນເຊື່ອມຍົງ 2-3 ແຂວງໄກ້ຄຽງ ຫລື ນະຄອນຫລວງກັບແຂວງໄກ້ຄຽງ(ຕົວແບບແຂວງບໍລິຄຳໄຊ-ຄຳມ່ວນ)

ພາກທີ III

ທິດທາງສ້າງແຜນຍຸດທະສາດພັດທະນາຈຸດໝາຍປາຍທາງທ່ອງທ່ຽວອະນຸລັກ

ຂອງແຂວງ-ນະຄອນຫລວງ

1. ຈັດກອງປະຊຸມເປີດກວ້າງເຜີຍແຜ່ແຜນແມ່ບົດຍຸດທະສາດພັດທະນາຈຸດໝາຍປາຍທາງທ່ອງທ່ຽວອະນຸລັກ
2. ຈັດຕັ້ງສະພາຮ່ວມືພັດທະນາຈຸດໝາຍປາຍທາງທ່ອງທ່ຽວອະນຸລັກ
3. ຮ່າງແຜນຄວາມຕ້ອງການຝຶກອົບຮົມ
4. ຮ່າງແຜນພັດທະນາຈຸດໝາຍປາຍທາງທ່ອງທ່ຽວອະນຸລັກ
5. ຮ່າງແຜນສຶກສາຂໍ້ມູນຂ່າວສານ ແລະ ການຕະຫລາດ
6. ຮ່າງແຜນສຳຫລວດສິ່ງດຶງດູດ ແລະກິດຈະກຳຕ່າງໆ
7. ຮ່າງແຜນສຳຫລວດໂຄງລ່າງພື້ນຖານ ແລະ ການ ຂົນສົ່ງ
8. ຮ່າງແຜນສົ່ງເສີມວັດທະນະທຳ ແລະ ການປົກປັກຮັກສາສິ່ງແວດລ້ອມ
9. ຮ່າງນະໂຍບາຍ-ແຜນຍຸດທະສາດພັດທະນາຈຸດໝາຍປາຍທາງທ່ອງທ່ຽວອະນຸລັດ-ແຜນປະຢັດ
10. ຮ່າງແຜນຕິດຕາມ-ກວດກາ ແລະປະເມີນຜົນ

ພາກທີ IV

ຕາຕະລາງປະຕິບັດໂຄງການຕ່າງໆຂອງແຜນຍຸດທະສາດພັດທະນາ

ຈຸດໝາຍປາຍທາງທ່ອງທ່ຽວອະນຸລັກໄລຍະ I

2016 - 2025

1. ສຳລັບປີ 2016 - 2020
2. ສຳລັບປີ 2021 - 2025

ບົດສະເໜີ

ຮ່າງ

ແຜນຍຸດທະສາດພັດທະນາຈຸດໝາຍປາຍທາງທ່ອງທ່ຽວອະນຸລັກ ແລະແຜນປະຕິບັດສຳລັບປີ 2016 - 2025

ພາກທີ I

ພາກສະເໜີ

1. ຄວາມໝາຍສຳຄັນຂອງທ່ອງທ່ຽວລະຫວ່າງປະເທດ

ການທ່ອງທ່ຽວໃນຍຸກປັດຈຸບັນບໍ່ພຽງແຕ່ສ້າງໂອກາດໃຫ້ມວນມະນຸດໃນໂລກໄດ້ເດີນທາງທ່ອງທ່ຽວເພື່ອສຶກສາຮຽນຮູ້ແລກປ່ຽນວັດທະນະທຳຊຶ່ງກັນ ແລະ ກັນ ແລະ ພັດຜ່ອນຍອນໃຈອັນນຳມາສູ່ຄວາມເຂົ້າໃຈ,ຄວາມເປັນມິດ ແລະ ການຊ່ວຍເຫລືອກັນເພື່ອໄດ້ມາຊຶ່ງສັນຕິພາບ,ມິດຕະພາບ, ຄວາມຢູ່ດີກິນດີ ແລະ ການມີຊີວິດທີ່ສົດໄສຮ່ວມກັນເທົ່ານັ້ນ ແຕ່ມາເຖິງທຸກວັນນີ້ໂດຍຜ່ານການວິວັດທະນາການເປັນເວລາຫລາຍໂຫດສະຫວັດ ການທ່ອງທ່ຽວລະຫວ່າງປະເທດໄດ້ກາຍເປັນຂະແໜງການໜຶ່ງຊຶ່ງນາໆປະເທດໃຫ້ຄວາມສຳຄັນເນື່ອງຈາກເປັນຂະແໜງການທີ່ສາມາດ:

- ຂັບເຄື່ອນການພັດທະນາເສດຖະກິດສັງຄົມ,ການຄ້າແລະການບໍລິການ;
- ສ້າງລາຍຮັບແຫ່ງຊາດ,ລາຍໄດ້ໃຫ້ທຸລະກິດ,ສັງຄົມແລະຊຸມຊົນ
- ດຶງດູດການລົງທຶນໃນແໜງການບໍລິການແລະຂະແໜງການອື່ນໆທີ່ປິ່ນອ້ອມ;
- ສ້າງວຽກງານໃຫ້ສັງຄົມ,ຊຸກຍູ້ການຜະລິດແລະການປຸ່ງແຕ່ງ;
- ແລກປ່ຽນວັດທະນະທຳອັນດີງາມແລະເຕັກໂນໂລຊີ
- ສົ່ງເສີມການປົກປັກຮັກສາອະນຸລັກວັດທະນະທຳ,ຮີດຄອງປະເພນີອັນດີງາມຂອງຊາດແລະປະຊາຊົນບັນດາເຜົ່າ,ປົກປັກຮັກສາອະນຸລັກທຳມະຊາດ,ນິເວດວິທະຍາແລະສິ່ງແວດລ້ອມ.
- ສ້າງຕະຫລາດການສົ່ງອອກກັບທີ່ໂດຍນຳເອົານັກທ່ອງທ່ຽວເຂົ້າມາທ່ຽວໃນປະເທດເພື່ອບໍລິໂພກຜະລິດຕະພັນແລະການບໍລິການຂອງປະເທດທີ່ມີໃວ້ຮັບໃຊ້.

ໃນເບື້ອງຕົ້ນພາຍຫລັງສົງຄາມໂລກຄັ້ງທີ II ໄດ້ສິ້ນສຸດລົງ ການທ່ອງທ່ຽວລະຫວ່າງປະເທດໄດ້ເປີດສັງກາດໃໝ່ໃນການເດີນທາງໄປມາຫາສູ່ກັນລະຫວ່າງປະເທດພາຍໃນທະວີບ ແລະ ລະຫວ່າງທະວີບຫາທະວີບຢ່າງກວ້າງຂວາງ ແລະ ມີການເຕີບໂຕຂະຫຍາຍຕົວຢ່າງໄວວາ ແລະ ຕໍ່ເນື່ອງດັ່ງຕົວເລກຂອງອົງການທ່ອງທ່ຽວໂລກໄດ້ພິມເຜີຍແຜ່ໃນປີ 2014 ຢູ່ຂ້າງລຸ່ມນີ້:

ປີ	1950	1980	1995	2014	2030
ນັກທ່ອງທ່ຽວ	25 000	278 000	527 000	1 133 000	1 800 000
ລາຍຮັບຈາກການທ່ອງທ່ຽວ	2 000	104 000	415 000	1 245 000	2 000 000

ທີ່ມາ: " Tourism Towards 2030 "

ຫົວໜ່ວຍຄິດໄລ່:

- 1 000 ຄົນ(ນັກທ່ອງທ່ຽວ)
- 100 000 ໂດລາສະຫະລັດອາເມລິກາ(ລາຍຮັບ)

ຄຳອະທິບາຍ:

- ນັກທ່ອງທ່ຽວສາກົນແມ່ນບຸກຄົນທີ່ເດີນທາງຈາກທີ່ຢູ່ອາໄສໄປອີກປະເທດໜຶ່ງແລະມີການພັກແຮມຢູ່ປະເທດນັ້ນຢ່າງໜ້ອຍໜຶ່ງຄືນດ້ວຍຈຸດປະສົງຕ່າງໆແຕ່ບໍ່ແມ່ນໄປຫາລາຍໄດ້;
- ລາຍຮັບຈາກການທ່ອງທ່ຽວແມ່ນລວມເອົາລາຍຈ່າຍຂອງນັກທ່ອງທ່ຽວໃນການເດີນທາງທ່ອງທ່ຽວໃນນັ້ນລວມມີ:ຄ່າຂົນສົ່ງ,ພັກແຮມ,ອາຫານ,ການໃຊ້ ສອຍອື່ນໆ...

2. ທ່າອ່ຽງຂອງການທ່ອງທ່ຽວລະຫວ່າງປະເທດ:

ອົງຕາມຕົວເລກສະຖິຕິຂອງການທ່ອງທ່ຽວໂລກໄດ້ຄາດຄະເນວ່າຮອດປີ 2030 ຈຳນວນນັກທ່ອງທ່ຽວລະຫວ່າງປະເທດຈະເພີ່ມຂຶ້ນເປັນ 1,8 ຕື້ຄົນ ແລະ ລາຍຮັບຈາກການທ່ອງທ່ຽວຈະເພີ່ມຂຶ້ນເປັນ 2 ພັນຕື້ໂດລາສະຫະລັດອາເມລິກາ.

ແຕ່ຢ່າງໃດກໍຕາມຕົວເລກດັ່ງກ່າວຂ້າງເທິງນັ້ນຊີ້ບອກເຖິງທ່າອ່ຽງຂອງການທ່ອງທ່ຽວລະຫວ່າງປະເທດຊຶ່ງຈະຍັງສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງເຖິງແມ່ນວ່າຈະມີຫລາຍເຫດການທີ່ບໍ່ປາດຖະໜາເກີດຂຶ້ນໃນ

ໂລກ ແລະ ໃນບາງພາກພື້ນຂອງໂລກກໍຕາມແຕ່ນັກທ່ອງທ່ຽວຍັງຕ້ອງການເດີນທາງເພື່ອຄວາມລື້ນເລີງ ພັກຜ່ອນ,ຊອກປະສົບການໃໝ່ໆໃນປະເທດຕ່າງໆທີ່ມີສະພາບແວດລ້ອມທີ່ເອື້ອອຳນວຍ,ສະດວກສະບາຍ ແລະປອດໄພທຸກປະການ. ດັ່ງນັ້ນມັນເປັນເລື່ອງທີ່ດີສຳລັບປະເທດທີ່ມີຊັບພະຍາກອນທ່ອງທ່ຽວ,ສະຖຽນ ລະພາບດ້ານການເມືອງ,ຄວາມສະຫງົບປອດໄພສົມຄວນສົ່ງເສີມການທ່ອງທ່ຽວເວົ້າລວມໂດຍເຊື່ອມຍົງກັບ ສາກົນ ແລະ ສົ່ງເສີມການທ່ອງທ່ຽວອະນຸລັກຍືນຍົງທີ່ເປັນຄວາມຕ້ອງການຂອງນັກທ່ອງທ່ຽວ.

3. ຄວາມອາດສາມາດຂອງການທ່ອງທ່ຽວລາວ

ໂດຍຜ່ານການວິໄຈຈາກລະບົບ"ສະໂວດອານາລີຊິສ"(SWOT ANALYSIS)ໃນສີ່ດ້ານຄື: ທ່າ ແຮງ-ໂອກາດ-ຈຸດອ່ອນ ແລະ ສິ່ງຂົ່ມຂູ່ ຈະເຫັນໄດ້ຄວາມອາດສາມາດຂອງການທ່ອງທ່ຽວລາວຈາກຈຸດ ດ້ອຍໃນ ເມື່ອກ່ອນທີ່ເປັນປະເທດປິດລ້ອມໄດ້ກາຍເປັນໂອກາດໃນປັດຈຸບັນໂດຍເຊື່ອມຍົງກັບບັນດາປະ ເທດໃນພາກພື້ນແລະອື່ນໆ:

ທ່າແຮງ	ຈຸດອ່ອນ
• ສປປລ ຕັ້ງຢູ່ພາກພື້ນທີ່ມີການທ່ອງທ່ຽວຂະ ຫຍາຍຕົວສູງ • ທຳມະຊາດແລະວັດທະນະທຳທີ່ມີຄວາມງົດ ງາມ,ຫລາກຫລາຍ,ດັ່ງເດີມ,ເປັນເອກະລັກ ຂອງຕົນເອງໄດ້ຮັບການອະນຸລັກເປັນຢ່າງດີ • ລັດຖະບານສະໜັບສະໜູນການການພັດທະ ນາການທ່ອງທ່ຽວທຳມະຊາດວັດທະນະທຳ ຢ່າງແຂງແຮງ • ປະຊາຊົນລາວເຜົ່າມີອັດທະຍາໄສດີຍິ້ມແຍ້ມ ແຈ່ມໃສແລະອົບອຸ່ນ • ມີຄວາມສະຫງົບທາງດ້ານການເມືອງ,ສະ ດວກປອດໄພໃນການເດີນທາງທ່ອງທ່ຽວ • ປະເທດລາວໄດ້ກາຍເປັນໃຈກາງເຊື່ອມ	• ຊັບພະຍາກອນມະນຸດແລະສີມືແຮງງານໃນ ຂະແໜງອຸດສາຫະກຳທ່ອງທ່ຽວຍັງຈຳກັດ ແລະບໍ່ຢູ່ໃນມາດຕະຖານທີ່ຕ້ອງການ • ພື້ນຖານໂຄງລ່າງການຄົມມະນາຄົມຂົນສົ່ງ ຈຳນວນໜຶ່ງຍັງບໍ່ສະດວກພຽງພໍ • ຂາດປະສົບການດ້ານການບໍລິການ,ການຕະ ຫລາດ,ການພັດທະນາແລະການປົກປັກຮັກ ສາອະນຸລັກມໍລະດົກວັດທະນະທຳ,ທຳມະ ຊາດແລະສິ່ງແວດລ້ອມ • ການຮ່ວມມືລະຫວ່າງພາກສ່ວນທີ່ກ່ຽວຂ້ອງ ລັດ-ເອກະຊົນແລະປະຊາຊົນໃນພື້ນທີ່ຍັງບໍ່ ໜັກແໜ້ນ • ການປະສານສົມທົບລະຫວ່າງຂະແໜງລັດ

ຍົງກັບບັນດາປະເທດລຸ່ມແມ່ນ້ຳຂອງແລະພາກພື້ນໄດ້ສະດວກປອດໄພ • ປະເທດລາວເປັນຈຸດໝາຍປາຍທາງທ່ອງທ່ຽວໜຶ່ງດຽວຂອງອາຊຽນ(ASEAN) • ສາມາດທ່ອງທ່ຽວໄດ້ຕະຫລອດປີຕາມຄວາມຕ້ອງການ	ທີ່ກ່ຽວຂ້ອງຕາມສາຍຕັ້ງແລະສາຍຂວາງຍັງເຮັດບໍ່ໄດ້ດີເທົ່າທີ່ຄວນ • ທຸລະກິດທ່ອງທ່ຽວລາວຍັງບໍ່ເຂັ້ມແຂງປະດິດຄິດແຕ່ງ ຍັງບໍ່ຕອບສະໜອງໄດ້ຄວາມຕ້ອງການຂອງນັກທ່ອງທ່ຽວ • ການຮ່ວມມືລະຫວ່າງທຸລະກິດທ່ອງທ່ຽວດ້ວຍກັນຍັງບໍ່ແໜ້ນແຟ້ນລວມສູນເປັນເອກະພາບ
ໂອກາດ	**ສິ່ງຂົ່ມຂູ່**
• ສ້າງລາຍຮັບແຫ່ງຊາດດ້ານເງິນຕາຕ່າງປະເທດ • ສົ່ງເສີມທຸລະກິດຂະໜາດນ້ອຍແລະກາງຕິດພັນກັບການພັດທະນາການທ່ອງທ່ຽວ ແລະການປົກປັກຮັກສາອະນຸລັກນິເວດວິທະຍາຊີວະນາໆພັນມໍລະດົກວັດທະນະທຳ ທຳມະຊາດແລະສິ່ງແວດລ້ອມ • ສ້າງງານໃຫ້ສັງຄົມ ຊຸມຊົນແລະຊຸກຍູ້ການຜະລິດແລະການປຸ່ງແຕ່ງ • ກະຈ່າຍລາຍໄດ້ໄປສູ່ຊົນນະບົດແລະເຂດຫ່າງໄກສອກຫລີກແນໃສ່ລົບລ້າງຄວາມທຸກຍາກເປັນກ້າວໆຕາມນະໂຍບາຍຂອງລັດຖະບານ • ຍາດແຍ່ງການຊ່ວຍເຫລືອແລະການສະໜັບສະໜູນດ້ານທຶນຮອນ,ເຕັກນິກ,ປະສົບການແລະການຖ່າຍທອດເຕັກໂນໂລຊີຢູ່ພາຍໃນແລະຈາກຕ່າງປະເທດ • ດຶງດູດການລົງທຶນຈາກພາຍໃນແລະຕ່າງປະເທດເພື່ອພັດທະນາໂຄງຮ່າງພື້ນຖານ, ສິ່ງອຳນວຍຄວາມສະດວກຮອງຮັບນັກທ່ອງ	• ການກຳນົດນະໂຍບາຍດ້ານການອະນຸລັກທຳມະຊາດດວັດທະນະທຳ,ນິເວດວິທະຍາ ແລະສິ່ງແວດລ້ອມຍັງບໍ່ທັນຮັບຮູ້ຮັບຮອງເປັນເອກະພາບຢ່າງກວ້າງຂວາງໃນຂອບເຂດທົ່ວປະເທດໃນພາກຈັດຕັ້ງປະຕິບັດ • ການ ຮ່ວມມືລະຫວ່າງຂະແໜງການລັດ-ເອກະຊົນແລະຊຸມຊົນ ຍັງບໍ່ແໜ້ນແຟ້ນກວ້າງຂວາງໃນທຸກລະດັບຂັ້ນສູນກາງແລະທ້ອງຖິ່ນ • ວິກິດເສຖະກິດຂອງໂລກແລະໃນປະເທດທີ່ສົ່ງອອກນັກທ່ອງທ່ຽວໂດຍສະເພາະແລະເຫດການກໍ່ການຮ້າຍສາກົນກໍຄືພະຍາດໂລກາຕິດແປດຕ່າງໆຍັງແມ່ນອຸປະສັກທີ່ບໍ່ເອື້ອອຳນວຍແລະສົ່ງເສີມການທ່ອງທ່ຽວເທົ່າທີ່ຄວນ • ທຸລະກິດທ່ອງທ່ຽວລາວຍັງຂາດປະສົບການໃນຫລາຍດ້ານເຊັ່ນດ້ານການຕະຫລາດ, ການບໍລິການ,ການປະດິດສ້າງແລະອື່ນໆ • ສີມືແຮງງານລາວສຳລັບອຸດສາຫະກຳທ່ອງທ່ຽວລາວຍັງບໍ່ພຽງພໍແລະບໍ່ທັນໄດ້ມາດ

ທ່ຽວແລະອື່ນໆ • ສ້າງສາພັດທະນາອາຊີບໃໝ່ໆໃຫ້ສັງຄົມ ແລະລາຍໄດ້ໃຫ້ສ່ວນບຸກຄົນ • ປະກອບສ່ວນຂັບເຄື່ອນການພັດທະນາເສດຖະກິດສັງຄົມ	ຖານເພື່ອແກ່ງແຍ່ງແຂ່ງຂັ້ນກັບຕ່າງປະເທດ • ງົບປະມານແຫ່ງລັດເພື່ອສະໜັບສະໜູນການພັດທະນາການທ່ອງທ່ຽວຍັງບໍ່ຕອບສະໜອງໄດ້ກັບຄວາມຕ້ອງການ

4. ຄວາມເປັນມາຂອງການທ່ອງທ່ຽວລາວ

4.1 ນິມິດໝາຍໃໝ່ຂອງການທ່ອງທ່ຽວລາວ

ພາຍໃຕ້ມະຕິຕົກລົງຂອງປະທານສະພາລັດຖະມົນຕີເລກທີ 91/ປສລ ລົງວັນທີ 24 ທັນວາ1989 ເປັນນິມິດໝາຍໃໝ່ທີ່ມີຄວາມສຳຄັນອັນໃຫຍ່ຫລວງໃຫ້ແກ່ການພັດທະນາການທ່ອງທ່ຽວລາວ ໂດຍປະຕິບັດສອງໜ້າທີ່ຍຸດທະສາດຄືປົກປັກຮັກສາ ແລະ ສ້າງສາປະເທດຊາດ ພັດທະນາເສດຖະກິດສັງຄົມທີ່ມີການໄລ່ລຽງແລະ ລົບລ້າງການບໍລິຫານເກື້ອກຸນ.

ມະຕິຕົກລົງດັ່ງກ່າວໄດ້ອະນຸຍາດ ໃຫ້ນັກທ່ອງທ່ຽວຕ່າງປະເທດເດີນທາງເຂົ້າມາສປປລາວ ແລະ ຄົນລາວເດີນທາງໄປທ່ຽວຕ່າງປະເທດ ພັດທະນາສົ່ງເສີມການທ່ອງທ່ຽວວັດທະນະທຳ ແລະ ທຳມະຊາດເປັນຫລັກ. ເພື່ອແນໃສ່ຄຸ້ມຄອງການພັດທະນາການທ່ອງທ່ຽວ ແລະ ທຸລະກິດບໍລິການນຳທ່ຽວມະຕິ 91 ຍັງໄດ້ຕົກລົງສ້າງຕັ້ງອົງການການທ່ອງທ່ຽວແຫ່ງຊາດຂຶ້ງມີບົດບາດ ແລະ ໜ້າທີ່ຄຸ້ມຄອງການພັດທະນາ ແລະ ທຸລະກິດການທ່ອງທ່ຽວໃນຂອບເຂດທົ່ວປະເທດ ຕົກລົງສ້າງຕັ້ງກອງທຶນພັດທະນາການທ່ອງທ່ຽວ ເພື່ອເປັນທຶນຮອນໃນການເຄື່ອນໄຫວວຽກງານການທ່ອງທ່ຽວ ແລະ ຕົກລົງສ້າງຕັ້ງບໍລິສັດທ່ອງທ່ຽວແຫ່ງຊາດເພື່ອສະໜອງການບໍລິການໃຫ້ນັກທ່ອງທ່ຽວທີ່ເດີນທາງເຂົ້າມາທ່ຽວ.

4.2 ຈຸດປະສົງໃນການສົ່ງເສີມການທ່ອງທ່ຽວ:

- ✓ ສ້າງລາຍຮັບແຫ່ງຊາດດ້ານເງິນຕາຕ່າງປະເທດ;
- ✓ ນຳໃຊ້ແລະສ້າງມູນຄ່າເພີ່ມໃຫ້ຊັບພະຍາກອນທ່ອງທ່ຽວທີ່ມີໃນປະເທດເປັນເພື່ອຂັບເຄື່ອນການພັດທະນາເສດຖະກິດສັງຄົມ;
- ✓ ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໃນເຂດຊົນນະບົດຫ່າງໄກສອກຫລີກແລະປະກອບສ່ວນລົບລ້າງຄວາມທຸກຍາກໄປພ້ອມໆກັນ;

- ✓ ສົ່ງເສີມຊຸກຍຸ້ການຜະລິດພາຍໃນເປັນຕົ້ນແມ່ນການປູກຝັງລ້ຽງສັດ ການປຸ່ງແຕ່ງ ແລະຫັດຖະກຳພື້ນເມືອງ;
- ✓ ດຶງດູດການລົງທຶນໃນຂະແໜງບໍລິການທ່ອງທ່ຽວ ແລະ ອຸດສາຫະກຳທ່ອງທ່ຽວ, ຫັດຖະກຳແລະການປຸ່ງແຕ່ງ;
- ✓ ສ້າງວຽກສ້າງງານທີ່ບໍລິສຸດໃຫ້ສັງຄົມ;
- ✓ ປົກປັກຮັກສາວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ ແລະປະຊາຊົນບັນດາເຜົ່າ;ປົກປັກຮັກສາອະນຸລັກທຳມະຊາດ,ນິເວດວິທະຍາແລະສິ່ງແວດລ້ອມໃຫ້ຍືນຍົງ.

ຜ່ານວິວັດທະນາການແຫ່ງການພັດທະນາການທ່ອງທ່ຽວເປັນເວລາກວ່າສອງໂຫດສະຫວັດ ການທ່ອງທ່ຽວລາວໄດ້ເຕີບໂຕຂະຫຍາຍຕົວຕາມລຳດັບ ແລະ ບັນລຸຈຸດປະສົງເປົ້າໝາຍທີ່ໄດ້ກຳນົດໃນແຕ່ລະໄລຍະທາງດ້ານລາຍຮັບເງິນຕາຕ່າງປະເທດ ແລະ ຈຳນວນນັກທ່ອງທ່ຽວຈຶ່ງເຮັດໃຫ້ການທ່ອງທ່ຽວລາວໄດ້ກາຍເປັນຂະແໜງການໜຶ່ງທີ່ຂະຫຍາຍຕົວຢ່າງວ່ອງໄວເປັນອັນດັບໜຶ່ງໃນລະຫວ່າງປີ 1990 ຫາ 2000 ດັ່ງຕົວເລກສະຖິຕິຂ້າງລຸ່ມນີ້:

ປີ	1993	1994	1995	1996	1997	1998	1999	2000
ນັກທ/ທ		146,2	346,5	403	463,2	500,2	614,3	737,,2
ລາຍຮັບ	6,3	7,6	24,7	44	73,3	80	97,3	113,9

ທີ່ມາ: ສະຖິຕິອົງການທ່ອງທ່ຽວແຫ່ງຊາດ

ຫົວໜ່ວຍຄິດໄລ່:

- 1000 ຄົນ(ນັກທ່ອງທ່ຽວ)
- 100 000 ໂດລາສະຫະລັດອາເລີກາ(ລາຍຮັບ)

ແຕ່ປີ 2001 ຫາ 2010 ການທ່ອງທ່ຽວລາວຍັງສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງເຖິງແມ່ນວ່າໃນບາງຊ່ວງລາຍຮັບອາດມີການລົດລົງ ເນື່ອງມາຈາກເຫດການພາວະວິໄສທີ່ເກີດຂຶ້ນເປັນຕົ້ນ ແມ່ນເຫດການກໍການຮ້າຍຄັ້ງອັນທີ່ 11/9/2001 ທີ່ສະຫະລັດອາເມລິກາ,ການລະບາດຂອງພະຍາດໄຂ້ຫວັດນົກດັ່ງນີ້ເປັນຕົ້ນ.

ປີ	2001	2002	2003	2004	2005	2006	2007	2008	2009	2010
ນັກທ/ທ	673,8	735,7	636,4	894,8	1095,3	1215,1	1624	1737	2008	2513
ລາຍຮັບ	103,8	113,4	894,8	118,9	146,8	173,2	233,3	275,5	267,7	386,7

ທີ່ມາ: ສະຖິຕິອົງກ/ຊ ຖະແຫລງຂ່າວວັດທະນະທຳແລະທ່ອງທ່ຽວ

ຫົວໜ່ວຍຄິດໄລ່:

- 1000 ຄົນ(ນັກທ່ອງທ່ຽວ)
- 100 000 ໂດລາສະຫະລັດອາເມລິກາ(ລາຍຮັບ)

5. ບາງບົດຮຽນທີ່ໄດ້ມາຈາກການພັດທະນາການທ່ອງທ່ຽວໃນຊຸມປ ີ ່ານມາ.

ການທ່ອງທ່ຽວລາວຍັງມີຂໍ້ຈຳກັດຫລາຍປະການເຊັ່ນດ້ານຜະລິດຕະພັນທ່ອງທ່ຽວ ການບໍລິການ ສິ່ງອຳນວຍຄວາມສະດວກ ລະບົບການຂົນສົ່ງໂດຍລວມ ການຄົມມະນາຄົມ ການຮອງຮັບ ແລະ ອື່ນໆ ຍົກເວັ້ນນະຄອນຫລວງ ວຽງຈັນແຂວງຈຳປາສັກ ແລະ ແຂວງຫລວງພະບາງທີ່ເປັນຈຸດສູມແລະມີການພັດ ທະນາເປັນເວລາຫລາຍປີກວ່າແຂວງອື່ນໆ ພາຍຫລັງຖືກຮັບຮອງເປັນມໍລະດົກໂລກໃນປີ 1995 ເປັນຕົ້ນ ມາໂດຍອົງການຢູແນສໂກ(UNESCO) ເມືອງຫລວງພະບາງໄດ້ກາຍເປັນຈຸດໝາຍປາຍທາງທ່ອງທ່ຽວ ລາວທີ່ດຶງດູດນັກທ່ອງທ່ຽວສາກົນໄດ້ຢ່າງແຂງແຮງໃນຂະນະນີ້;

ອີກດ້ານໜຶ່ງຊຶ່ງການທ່ອງທ່ຽວລາວຈະຕ້ອງເອົາໃຈໃສ່ຄືການໂຄສະນາດຶງດູດນັກທ່ອງທ່ຽວ ການ ເຂົ້າເຖິງຕະຫລາດນັກທ່ອງທ່ຽວເປົ້າໝາຍ ການສະໜອງຂໍ້ມູນຂ່າວສານທ່ອງທ່ຽວຈະຕ້ອງຫລາກຫລາຍລະ ອຽດຊັດເຈນແນ່ນອນເພື່ອສ້າງຄວາມສົນໃຈຕອບສະໜອງຄວາມຕ້ອງການຂອງນັກທ່ອງທ່ຽວພາຍໃນແລະ ຕ່າງປະເທດຢ່າງກວ້າງຂວາງ

ຜ່ານມາການທ່ອງທ່ຽວລາວໄດ້ຮັບການສະໜັບສະໜູນຢ່າງກວ້າງຂວາງຈາກອົງການສາກົນ ບັນ ດາປະເທດເພື່ອນມິດ ສະຖາບັນການເງິນ ອົງການສາກົນທີ່ບໍ່ເປັນລັດຖະບານໂດຍໄດ້ສ້າງແຜນແມ່ບົດ ເພື່ອການພັດທະນາໃນດ້ານຕ່າງໆນາໆເຊັ່ນ: ການພັດທະນາການທ່ອງທ່ຽວວັດທະນະທຳການທ່ອງທ່ຽວ ອະນຸລັກຍືນຍົງ ການເຂົ້າສູ່ຕະຫລາດທ່ອງທ່ຽວສາກົນ ແລະ ອື່ນໆແຕ່ກໍ່ບໍ່ໄດ້ຮັບການຈັດຕັ້ງປະຕິບັດຕາມ ທາງຄວນແຕ່ຍັງຕ້ອງໄດ້ສືບຕໍ່ຍາດແຍ່ງ

ການພັດທະນາການທ່ອງທ່ຽວລາວຜ່ານມາຍັງບໍ່ລວມສູນເປັນເອກະພາບລະຫວ່າງສູນກາງກັບທ້ອງຖິ່ນບໍ່ເປັນໄປຕາມນະໂຍບາຍການ# ໂດຍສະເພາະໃນການຈັດສັນແບ່ງເຂດພັດທະນາ ອຸດສາຫະກຳການ# ປູກຝັງລ້ຽງສັດ ການທ່ອງທ່ຽວ ແລະ ອື່ນໆບໍ່ແນ່ນອນຊັດເຈນຊຶ່ງເຮັດໃຫ້ມີຜົນກະທົບຕໍ່ການທ່ອງທ່ຽວຢູ່ບໍ່ໜ້ອຍ

ການຮ່ວມມືລະຫວ່າງຂະແໜງການລັດທີ່ກ່ຽວຂ້ອງ,ລະຫວ່າງທຸລະກິດທ່ອງທ່ຽວ ແລະ ອຸດສາຫະກຳທ່ອງທ່ຽວ ແລະ ລະຫວ່າງຂະແໜງການລັດກັບທຸລະກິດທ່ອງທ່ຽວຍັງບໍ່ຜູກແໜ້ນເພື່ອສະໜັບສະໜູນສົ່ງເສີມການທ່ອງທ່ຽວໃຫ້ສາມາດແກ່ງແຍ່ງແຂ່ງຂັນກັບປະເທດອື່ນໆເວົ້າລວມ ແລະ ປະເທດໄກ້ຄຽງເວົ້າສະເພາະ

6. ສິ່ງທ້າທາຍໃນຕໍ່ໜ້າ (2016-2025)

ໃນສະເພາະໜ້າ ແລະ ຍາວນານການທ່ອງທ່ຽວລາວຈະຕ້ອງປະເສີນໜ້າກັບສິ່ງທ້າທາຍຫລາຍປະການດັ່ງນີ້:

- ✓ ການແກ່ງແຍ່ງແຂ່ງຂັນດຶງດູດນັກທ່ອງທ່ຽວສາກົນຈະເພີ່ມທະວີຂຶ້ນເລື້ອຍໆທາງດ້ານຄວາມຫລາກຫລາຍ,ຄຸນນະພາບແລະມາດຕະຖານຂອງຜະລິດຕະພັນທ່ອງທ່ຽວກໍຄືການບໍລິການຕ່າງໆ;
- ✓ ການທ່ອງທ່ຽວລາວຕ້ອງພັດທະນາແລະສ້າງຕະຫລາດເປັນຂອງຕົນເອງໃຫ້ໄດ້ແຕ່ບໍ່ແມ່ນຈຸດໝາຍປາຍທາງເຊື່ອມຕໍ່ສຳລັບປະເທດໄກ້ຄຽງ;
- ✓ ສ້າງຂະແໜງການທ່ອງທ່ຽວໃຫ້ເຂັ້ມແຂງໃນທຸກລະດັບຂັ້ນມະຫາພາບແລະຈຸລະພາກໂດຍໃຫ້ທຸກພາກສ່ວນລັດ-ທຸລະກິດທີ່ກ່ຽວຂ້ອງແລະປະຊາຊົນເຂົ້າມາມີສ່ວນຮ່ວມຢ່າງກວ້າງຂວາງໃນຂະບວນການພັດທະນາຈຸດໝາຍປາຍທາງທ່ອງທ່ຽວ;
- ✓ ລະບຽບຫລັກການ,ຂໍ້ກຳນົດກົດໝາຍກ່ຽວກັບການຄຸ້ມຄອງທຸລະກິດທ່ອງທ່ຽວແລະອຸດສາຫະກຳທ່ອງທ່ຽວແລະກ່ຽວກັບການປົກປັກຮັກສາອະນຸລັກຊັບພະຍາກອນທ່ອງທ່ຽວໂດຍລວມຈະຕ້ອງມີການປັບປຸງແກ້ໄຂຮັດກຸມສັກສິດເພື່ອການພັດທະນາທີ່ຍືນຍົງ.
- ✓ ຈຸດໝາຍປາຍທາງທ່ອງທ່ຽວລາວຕ້ອງຫັນໄປສູ່ຄຸນນະພາບໃໝ່ເປັນມາດຕະຖານສາກົນ
- ✓ ການຄຸ້ມຄອງບໍລິຫານດ້ານສິ່ງແວດລ້ອມຍັງເປັນຂໍ້ຄົງຄ້າງຫລາຍປະການໃນໂຕເມືອງນ້ອຍໃຫຍ່ແລະຢູ່ຊົນນະບົດເປັນຕົ້ນແມ່ນເລື່ອງຈຳກັດຂີ້ເຫຍື້ອ,ການຫລ້າຂ້າສັດສັດປ່າແລະອື່ນໆ

- ✓ ການພັດທະນາບຸກຄະລະກອນວິຊາການຂັ້ນມະຫາພາບ ແລະ ສີມືແຮງທີ່ເປັນອາຊີບໄດ້ມາດຕະຖານສາກົນສະໜອງໃຫ້ພາກທຸລະກິດທ່ອງທ່ຽວແລະອຸດສາຫະກຳທ່ອງທ່ຽວແມ່ນບັນຫາຮີບດ່ວນ
- ✓ ສ້າງຂະແໜງການທ່ອງທ່ຽວດ້ານມະຫາພາບແລະຈຸລະພາບໃຫ້ເຂັ້ມແຂງຄົບອົງປະກອບໄກ້ສິດຕິດພັນກັນ ສົ່ງເສີມຊຶ່ງກັນແລະກັນຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ທັງສອງພາກສ່ວນ

ພາກທີ II

ກົນໄກດຳເນີນການພັດທະນາຈຸດໝາຍປາຍທາງທ່ອງທ່ຽວອະນຸລັກ

1. ນິຍາມຈຸດໝາຍປາຍທາງທ່ອງທ່ຽວອະນຸລັກ

1.1 " ການທ່ອງທ່ຽວອະນຸລັກເປັນການທ່ອງທ່ຽວທີ່ບໍ່ສ້າງຄວາມເສຍຫາຍ ແລະ ເກີດຜົນກະທົບດ້ານລົບໃຫ້ທຳມະຊາດ,ວັດທະນະທຳ,ຊີວະນາໆພັນ ແລະ ສິ່ງແວດລ້ອມແຕ່ເປັນການດຳລົງອະນຸລັກຮັກສາສິ່ງດັ່ງກ່າວໃຊ້ເພື່ອການສຶກສາຮຽນຮູ້ສຳລັບຜູ້ໄປທ່ຽວ ແລະ ຄຸ້ມຄອງບໍລິຫານພື້ນທີ່ກ່ຽວຂ້ອງໃຊ້ໂດຍດີອັນເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນທີ່ອາໄສຢູ່ໃນພື້ນທີດີຂຶ້ນເປັນກ້າວໆ." (International Ecoturism Society).

1.2 " ເປັນການເດີນທາງທ່ອງທ່ຽໃນເຂດທຳມະຊາດຕ່າງໆດ້ວຍຄວາມເຂົ້າລົບສະພາບແວດລ້ອມເພື່ອໄດ້ມາຊຶ່ງຄວາມລື້ນເລີງ ແລະ ການຮຽນຮູ້ທຳມະຊາດທີ່ປະກອບດ້ວຍຈຸດພິເສດຂອງວັດທະນະທຳໃນອາດີດ ແລະ ປັດຈຸບັນທີ່ໄດ້ສົ່ງເສີມໃຫ້ເກີດການອະນຸລັກ,ມີຜົນກະທົບໜ້ອຍຈາກນັກທ່ອງທ່ຽວ, ແລະ ໄດ້ຮັບຜົນປະໂຫຍດທາງດ້ານເສດຖະກິດ-ສັງຄົມສຳລັບຊຸມຊົນໃນພື້ທີ່. " (IUCN-The World Conservation Union)

2. ວິໄສທັດການພັດທະນາຈຸດໝາຍປາຍທາງທ່ອງທ່ຽວອະນຸລັກຂອງ ສປປລາວ(2016 -2025)

ຈຸດໝາຍປາຍທາງທ່ອງທ່ຽວອະນຸລັກລາວແຕ່ນີ້ຫາ 2025 ຈະເປັນການທ່ອງທ່ຽວທີ່ເສີມສ້າງປະສົບການໃໝ່ໃຫ້ຜູ້ມາທ່ຽວ (visitor) ໄດ້ຊື່ນຊົມຄວາມງົດງາມຂອງທຳມະຊາດ,ຮຽກຮູ້ການຢູ່ຮ່ວມກັນລະຫວ່າງຄົນກັບທຳມະຊາດຢ່າງສະໜິດແໜ້ນ ແລະ ນຳຜົນປະໂຫຍດມາໃຫ້ຊຶ່ງກັນ ແລະ ກັນກໍຄືຊຸມຊົນໃນທ້ອງຖິ່ນ(host)ອັນເປັນສິ່ງຈຸງໃຈໃຫ້ເກີດແນວ ຄິດປົກປັກຮັກສາອະນຸລັກທຳມະຊາດວັດທະນະທຳ ແລະ ສິ່ງແວດລ້ອມໃຫ້ກາຍເປັນມໍລະດົກແກ່ຄົນຮຸ່ນໃໝ່ໄດ້ສືບສານຊື່ນຊົມ ແລະ ຊົນໃຊ້ຊັບພະຍາກອນເຫລົ່ານັ້ນຄືກັນກັບຄົນຮຸ່ນປັດຈຸບັນໄດ້ມາຈາກຄົນຮຸ່ນກ່ອນ..

ຈຸດໝາຍປາຍທາງທ່ອງທ່ຽວອະນຸລັກຈະເຊື່ອມໂຍງປະກອບສ່ວນໃນພາລະກິດສາກົນຫລຸດຜ່ອນໂລກຮ້ອນຕາມສົນທິສັນຍາປາຣີ-ປະເທດຝະລັ່ງຊຶ່ງລັດຖະບານ ສປປ ລາວ ໄດ້ໃຫ້ສັດຕະຍາບັນຄັ້ງວັນທີ07/08/2016 ທີ່ນະຄອນຫລວງວຽງຈັນ.

ການທ່ອງທ່ຽວລາວຕອ້ງສ້າງຄວາມເຂັ້ມແຂງໃຫ້ຕົນເອງໃນທຸກດ້ານ: ການຈັດຕັ້ງ,ການພັດທະນາ, ການຄຸ້ມຄອງບໍລິການ ແລະ ການຕະຫລາດ.

3. ແນວທາງພັດທະນາການທ່ອງທ່ຽວອະນຸລັກຜ່ານມາ

ການພັດທະນາການທ່ອງທ່ຽວອະນຸລັກ ຜ່ານມາແມ່ນໄດ້ດຳເນີນການໃນຫລາຍຮູບແບບ ທີ່ແຕກຕ່າງກັນໄປຕາມຈຸດປະສົງ, ເປົ້າໝາຍແລະນະໂຍບາຍຂອງລັດຖະບານເຊັ່ນ: (1)ແນໃສ່ລົບລ້າງຄວາມທຸກຍາກ (Pro-poor tourism); (2)ແນໃສ່ພັດທະນາແບບປະຊາຊົນມີສ່ວນຮ່ວມ (community based tourism); (3)ແນໃສ່ພັດທະນາການທ່ອງທ່ຽວແບບຍືນຍົງ ແລະ ພັດທະນາການທ່ອງທ່ຽວອະນຸລັກ (sustainable tourism development and eco-tourism development

ຢ່າງໃດກໍດີແຕ່ນີ້(2016)ເຖິງປີ 2025 ແນວທາງ ແລະ ຍຸດທະສາດການພັດທະນາຈຸດໝາຍປາຍທາງທ່ອງທ່ຽວອະນຸລັກລາວ ຍັງຈະສືບຮັກໃຊ້ເນື້ອຫາສາລະ ດັ່ງກ່າວມາຂ້າງເທິງນັ້ນທີ່ໄດ້ຮັບຜົນສຳເລັດ ແຕ່ປ່ຽນແປງໃນຮູບການ ແລະ ຫັນໄປສູ່ຄຸນນະພາບ ແລະ ມາດຕະຖານໃໝ່ທີ່ມີລັກສະນະສາກົນ,ຮັກສາໃຊ້ຊຶ່ງເອກະລັກເປັນຂອງຕົນເອງ ແລະ ຄວາມແຕກຕ່າງກັບແຫ່ງອື່ນໆໃນພາກພື້ນ,ຕອບສະໜອງໄດ້ປະສົບການໃໝ່ໆໃຫ້ຜູ້ມາຢ້ຽມ.

4. ການຮ່ວມມືຈາກທຸກພາກສ່ວນແມ່ນຄວາມຈຳເປັນພາວະວິໄສ

ການພັດທະນາຈຸດໝາຍປາຍທາງ ອະນຸລັກເປັນສິ່ງທີ່ມີຄວາມຫຍຸ້ງຍາກສັບສົນຢູ່ບໍ່ໜ້ອຍໃນພາກປະຕິບັດເນື່ອງຈາກເປັນການພັດທະນາທີ່ມີການພົວພັນ ແລະ ຕິດພັນກັບຫລາຍພາກສ່ວນຂະແໜງການທີ່ກ່ຽວຂ້ອງກັບການທ່ອງທ່ຽວ ແລະ ອຸດສາຫະກຳທ່ອງທ່ຽວ ຜົນສຳເລັດຂອງການພັດທະນາຈຸດໝາຍປາຍທາງ ອະນຸລັກຍ່ອມເກີດຂຶ້ນໄດ້ກໍຕໍ່ເມື່ອທຸກພາກສ່ວນຂະແໜງການລັດ,ພາກສ່ວນທຸລະກິດ ແລະ ປະຊາຊົນຫລືຊຸມຊົນ ທີ່ອາໄສຢູ່ໃນພື້ນທີ່ເຂດພັດທະນາມີຄວາມຈິງຈັງ ໃຫ້ຄວາມຮ່ວມມືເປັນເຈົ້າການປະກອບສ່ວນໃນກິດຈະກຳຕ່າງໆຕາມພາລະບົດບາດ ແລະ ພາລະກິດຂອງຕົນຢ່າງຕັ້ງໜ້າແມ່ນປັດໄຈຊີ້ຂາດ ຜົນປະໂຫຍດທີ່ເກີດຂຶ້ນນັ້ນຈະມີສ່ວນແບ່ງໃຫ້ແກ່ທຸກຝ່າຍແນ່ນອນ

ການພັດທະນາຈຸດໝາຍປາຍທາງທ່ອງທ່ຽວອະນຸລັກແລະຍືນຍົງທີ່ປັດສະຈາກການຮ່ວມມືຈາກພາກສ່ວນດັ່ງກ່າວນັ້ນຈະເປັນແຕ່ພຽງຄວາມປາດຖະໜາ ແລະ ເຈດຕະນາລົມທີ່ດີເທົ່ານັ້ນ.



ການຮ່ວມມືຈະເກີດປະສິດຕິພາບແລະປະສິດທິຜົນກໍຕໍ່ເມື່ອມີການ :

4.1 ສ້າງລະບົບຊີ້ນຳນຳພາທີ່ເປັນເອກະພາບໃນຂະແໜງທ່ອງທ່ຽວ

ການຮ່ວມມືຈາກພາກສ່ວນຕ່າງໆນັ້ນ#ບໍ່ພຽງແຕ່ມີໜ້າໃນຄະນະຫລືກອງປະຊຸມເທົ່ານັ້ນແຕ່ຕ້ອງພ້ອມກັນສ້າງລະບົບການຈັດຕັ້ງຊີ້ນຳນຳພາທີ່ມີປະສິດທິພາບແຕ່ສູນກາງລົງສູ່ທ້ອງຖິ່ນທີ່ ເປັນເອກະພາບທາງດ້ານນະໂຍບາຍ ແລະ ສັກສິດໃນພາກຈັດຕັ້ງປະຕິບັດ.

4.2 ສ້າງກົນໄກປະສານງານທີ່ສະດວກວອງໄວ

ກຳນົດກົນໄກປະສານງານລະຫວ່າງສາຍຕັ້ງ ແລະ ສາຍຂວາງທີ່ສະດວກວອງໄວແລະທັນເວລາ ຈະມີຜົນດີຫລາຍໃຫ້ແກ່ການສົ່ງເສີມ ແລະ ພັດທະນາຈຸດໝາຍ ປາຍທາງອະນຸລັກຜ່ານຜ່າໄດ້ ໃນລະດັບອັນແນ່ນອນບັນດາອຸປະສັກ ແລະ ສິ່ງທ້າທາຍຕ່າງໆນາໆປະການ

4.3 ເປີດກວ້າງການຮ່ວມມືແລະການດຳເນີນການພັດທະນາ

ເພື່ອລະດົມແນວຄິດ ຍາດແຍ່ງການສະໜັບສະໜູນຈາກພາກສ່ວນທີ່# ກ່ຽວຂ້ອງພາຍໃນປະເທດ ແລະ ຕ່າງປະເທດ ການເຂົ້າຮ່ວມຂະບວນການພັດທະນາຂອງຄົນພາຍໃນ ແລະ ຕ່າງປະເທດທີ່ມີ ທັກ

ສະດ້ານການພັດທະນາ,ມີປະສົບການ ແລະ ຄວາມສົນໃຈໃນເລື່ອງທ່ອງທ່ຽວ,ການຈັດຕັ້ງສາ ກົນທີ່ເປັນ ແລະບໍ່ເປັນລັດຖະບານ ອົງການພັດທະນາ ແລະ ສະຖາບັນ ການເງິນຕ່າງໆຈະເປັນກຳລັງແຮງສັງລວມ ໃຫ້ການພັດທະນາຈຸດໝາຍປາຍທາງທ່ອງທ່ຽວອະນຸລັກພາກສ່ວນຕ່າງໆທີ່ມີສ່ວນຮ່ວມໄດ້ກຳນົດຢູ່ໃນໃບ ຊ້ອນທ້າຍ II-III ແລະ IV:

8. **ລັກສະນະຮູບແບບການພັດທະນາຈຸດພາຍປາຍທາງທ່ອງທ່ຽວອະນຸລັກ**

5.1 ລັກສະນະແບບວົງຈອນອ້ອມຕົວເມືອງໃດໜຶ່ງຂອງແຂວງ-ນະຄອນຫລວງ

ຕົວແບບ: ເມືອງຫລວງນ້ຳທາ

ຈິນຕະນາການລັກສະນະນ້ຳທາ(ແຂວງຫລວງນ້ຳທາ)

5.2 ລັກສະນະແບບວົງຈອນເຊື່ອມໂຍງ 2-3 ຕົວເມືອງພາຍໃນແຂວງ-ນະຄອນຫລວງ

ຕົວແບບ: ແຂວງຊຽງຂວາງ

5.3 ลักสะນะแบบວົງຈອນເຊື່ອມ ໂຍງ 2-3 ແຂວງ-ນະຄອນຫລວງໄກ້ຄຽງກັນ

ຕົວແບບ: ແຂວງບໍລິຄຳໄຊ-ຄຳມ່ວນ

ໝາຍເຫດ: ລັກສະນະຂອງ 3 ຮູບແບບວົງຈອນທີ່ສະແດງໃຫ້ເຫັນຢູ່ຂ້າງເທິງນັ້ນມີອັນຄ້າຍ ຄືກັນ ແລະ ມີອັນຕ່າງກັນດັ່ງນີ້:

- ສິ່ງທີ່ຄ້າຍຄືກັນແມ່ນພັດທະນາເປັນຮູບວົງຈອນ
- ສິ່ງທີ່ຕ່າງກັນຄື ເນື້ອຫາສາຣະຂອງວົງຈອນຈະຕ່າງກັນບົນພື້ນຖານດ້ານສິ່ງແວດລ້ອມ ,ວັດທະນະທຳ,ເອກະລັກ,ສິ່ງດຶງດູດ,ກິດຈະກຳ,ວິຖີຊີວິດຂອງຊຸມຊົນບັນດາເຜົ່າແລະ ອື່ນໆທີ່ເປັນມໍລະດົກຂອງທ້ອງຖິ່ນ.

ວົງຈອນທ່ອງທ່ຽວທີ່ສຳເລັດການພັດທະນາຈະກາຍເປັນຈຸດໝາຍປາຍທາງທ່ອທ່ຽວອະນຸລັກຂອງ ທ້ອງຖິ່ນ ທີ່ສ້າງຄວາມຫລາກຫລາຍໃຫ້ພາກທຸລະກິດທ່ອງທ່ຽວລາວນຳໄປດຳເນີນການຕະຫລາດຢູ່ພາຍ ໃນແລະຕ່າງປະເທດໄດ້ເປັນຢ່າງດີ ແລະ ເຮັດໃຫ້ທຸລະກິດນຳທ່ຽວຕ່າງປະເທດຜູ້ສົ່ງນັກທ່ອງທ່ຽວອອກ (Tour Oprator Outbound) ມີທາງເລືອກຈຸດໝາຍປາຍທາງທ່ອງທ່ຽວອະນຸລັກຂອງສປປລາວໄດ້ຕາມ ຄວາມຕ້ອງການອີກດ້ວຍ.

ພາກທີ III

ທິດທາງສ້າງແຜນຍຸດທະສາດພັດທະນາ

ຈຸດໝາຍປາຍທາງທ່ອງທ່ຽວອະນຸລັກຂອງແຂວງ-ນະຄອນຫລວງ#

1. ໃນເບື້ອງຕົ້ນບັນດາແຂວງ ແລະ ນະຄອນຫລວງຈະຕ້ອງຈັດກອງປະຊຸມເປີດກວ້າງໆເພື່ອ ແຜ່ແຜນແມ່ບົດຍຸດທະສາດພັດທະນາຈຸດໝາຍປາຍທາງທ່ອງທ່ຽວອະນຸລັກ ແລະ ແຜນຈັດຕັ້ງ ປະຕິບັດໂດຍການເຂົ້າຮ່ວມຂອງທຸກພາກສ່ວນຂະແໜງການລັດທີ່ກ່ຽວຂ້ອງພາກທຸລະກິດອຸດສາ ຫະກຳທ່ອງທ່ຽວ ຕ່າງໜ້າການຈັດຕັ້ງມະຫາຊົນ ສ່ວນບຸກຄົນທີ່ສົນ ໃຈ ແລະ ທາບທາມຄຳຄິດ ເຫັນເພື່ອລະດົມຄຳຄິດເຫັນ ແລະ ການຮ່ວມມືໂດຍການເຂົ້າຮ່ວມຂະບວນການພັດທະນາ ແລະ ສ້າງແຜນພັດທະນາຈຸດໝາຍປາຍທາງທ່ອງທ່ຽວຂອງແຂວງ-ນະຄອນຫລວງ

2. ຈັດຕັ້ງສະພາຮ່ວມມືພັດທະນາຈຸດໝາຍປາຍທາງທ່ອງທ່ຽວອະນຸລັກຂັ້ນ ສູນກາງ#ແລະ ຂັ້ນ ແຂວງ - ນະຄອນຫລວງ ການສ້າງຕັ້ງສະພາຮ່ວມມືດັ່ງກ່າວປະກອບມີ:



ແລະອື່ນໆທີ່ເຫັນວ່າມີຄວາມຕ້ອງການແລະຈຳເປັນພ້ອມດ້ວຍກົດລະບຽບຂອງສະພາຮ່ວມມື (ເບິ່ງໃບຊ້ອນທ້າຍ I)

3. ຮ່າງແຜນ ຄວາມຕ້ອງການຝຶກອົບຮົມ

- ຍົກລະດັບຄວາມຮູ້ຄວາມສາມາດສາມາດດ້ານວິຊາການໃຫ້ໜ່ວຍປະຕິບັດງານ (Task Force)
- ປູກຈິດສຳນຶກໃຫ້ຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງກຳແພງນະຄອນແລະຂັ້ນເມືອງທີ່ກ່ຽວຂ້ອງ
- ປູກຈິດສຶນຶກໃຫ້ອຳນາດການປົກຄອງຂັ້ນບ້ານ ແລະ ປະຊາຊົນໃນເຂດເປົ້າໝາຍການພັດທະນາຈຸດໝາຍປາຍທາງທ່ອງທ່ຽວອະນຸລັກ
- ສ້າງຕັ້ງໜ່ວຍຝຶກອົບຮົມເຄື່ອນທີ່ເພື່ອດຳເນີນການຝຶກອົບຮົມດ້ານທັກສະການບໍລິການຕ່າງໆທີ່ປະຊາຊົນຕ້ອງການເພື່ອປະກອບສ່ວນໃນກິດຈະກຳຕ່າງໆຂອງຂະບວນການສົ່ງເສີມຈຸດໝາຍປາຍທາງທ່ອງທ່ຽວອະນຸລັກ

4. ຮ່າງແຜນການພັດທະນາຈຸດໝາຍປາຍທາງທ່ອງທ່ຽວອະນຸລັກ

- ລົງສຳຫລວດເສັ້ນທາງວົງຈອນ ເກັບກຳຂໍ້ມູນພື້ນຖານ,ຊັບພະຍາກອນທ່ອງທ່ຽວຕາມເສັ້ນທາງ ວົງຈອນ ແລະ ຢູ່ໃນເຂດເປົ້າໝາຍການພັດທະນາ ວິໄຈຄວາມອາດສາມາດຂອງເຂດເປົ້າໝາຍການພັດທະນາໃນທຸກດ້ານ
- ສຳຫລວດເກັບກຳຄວາມສົນໃຈ ຄວາມພ້ອມ ແລະ ຄວາມຕ້ອງການກໍຄືຄວາມປາດຖະໜາຂອງປະຊາຊົນທີ່ອາໄສຢູ່ໃນເຂດເປົ້າໝາຍການພັດທະນາແລະການເຂົ້າຮ່ວມຂະບວນການປົກປັກຮັກ ສາອະນຸລັກທຳມະຊາດວັດທະນະທຳແລະ ສິ່ງແວດລ້ອມ
- ກຳນົດເສັ້ທາງວົງຈອນ(ຮູບແບບທີ່ 1-2 ຫລື 3 ເຂົ້າໃນແຜນທີ່ຂອບເຂດຂອງແຂວງ-ນະຄອນ ຫລວງ

#
#
#

5. ຮ່າງແຜນສຶກສາຂໍ້ມູນ ແລະ ການການຕະຫລາດ

- ສ້າງຄຳຂວັນ(slogan) ແລະສັນຍາລັກ(logo)ຈຸດໝາຍປາຍທາງທ່ອງທ່ຽວອະນຸລັກຂອງ ແຂວງ-ນະຄອນຫລວງໃຫ້ເປັນເຄື່ອງໝາຍການຄ້າຂອງຕົເອງ
- ສ້າງແລະ/ຫລືປັບປຸງສູນຂໍ້ມູນຂ່າວສານປະກອບເຄື່ອງມື ແລະ ອຸປະກອນສື່ສານຕ່າງໆ: ຄອມ ປົວເຕີ ອິນເຕີເນັດ ເວບສາຍ(website), ຜະລິດແຜນທີ່ຄູ່ມືທ່ອງທ່ຽວພາຍໃນແຂວງ-ນະຄອນ ຫລວງ ແລະ ເສັ້ນທາງວົງຈອນຈຸດໝາຍປາຍທາງທ່ອງທ່ຽວອະນຸລັກ ແລະ ອື່ນໆທີ່ນັກທ່ອງທ່ຽວ ຕ້ອງການ
- ເກັບກຳຂໍ້ມູນດ້ານການຕະຫລາດມາສຶກສາວິໄຈທ່າອ່ຽງ ຄວາມຮູ້ສຶກ ຄວາມຕ້ອງການ ແລະ ອື່ນໆທີ່ເປັນປະໂຫຍດເພື່ອດຳເນີນການສົ່ງເສີມແລະເຂົ້າເຖິງຕະຫລາດທ່ອງທ່ຽວເປົ້າໝາຍຢ່າງ ຖືກຕ້ອງ

6. ຮ່າງແຜນສຳຫລວດສິ່ງດຶງດູດ ແລະ ກິດຈະກຳຕ່າງໆ

- ສຳຫລວດເກັບກຳກິດຈະກຳທີ່ມີໃນປັດຈຸບັນ ແລະ ຄວນປັບປຸງຍົກລະດັບສູ່ຄຸນນະພາບໃໝ່ ແລະ ກິດຈະກຳທີ່ສາມາດສ້າງຂຶ້ນໃໝ່ຕອບສະໜອງຄວາມຕ້ອງການຂອງນັກທ່ອງທ່ຽວ
- ສິ່ງດຶງດູດອື່ນໆທີ່ມີຄວາມໂດດເດັ່ນເປັນເອກະລັກສະເພາະທ້ອງຖິ່ນຕາມເສັ້ນທາງວົງຈອນ ທ່ອງທ່ຽວອະນຸລັກ ແລະ ຢູ່ເຂດເປົ້າໝາຍການພັດທະນາເປັນຕົ້ນດ້ານທຳມະຊາດວັດທະນະທຳ ເພນີປະຕິບັດເທດສະການການນຸ່ງຖືຮີດຄອງປະເພນີອັນດີງາມ ແລະ ອື່ນໆ

7 ຮ່າງແຜນການສຳຫລວດໂຄງລ່າງພື້ນຖານ ແລະ ການ ຂົນສົ່ງ

- ສຳຫລວດເກັບກຳສິ່ງອຳນວຍຄວາມສະດວກທີ່ມີແລະຍັງບໍ່ທັນມີຕາມເສັ້ທາງວົງຈອນທ່ອງທ່ຽວ ແລະ ໃນເຂດພື້ນທີ່ການພັດທະນາເຊັ່ນ: ປ້າຍສັນຍາ ຕ່າງໆ, ໂຮງແຮມເຮືອນພັກ ຮ້ານອາຫານ ກິນດື່ມ ສາລາພັກຜ່ອນໜ່ວຍງານບໍລິການກິດຈະກຳ ແລະ ອື່ນໆໃນນີ້ລວມອັນທີ່ມີຢູ່ໃນປັດຈຸບັນ ແລະ ອັນທີ່ຄວນສ້າ ຂຶ້ນໃໝ່
- ສຳຫລວດສະພາບເສັ້ນທາງວົງຈອນທ່ອງທ່ຽວ ແລະ ເສັ້ນທາງເຂົ້າສູ່ແຫລ່ງທ່ອງທ່ຽວໃນເຂດ ພື້ນທີ່ການພັດທະນາ

- ສຳຫລວດເກັບກຳດ້ານການຂົນສົ່ງຕາມເສັ້ນທາງວົງຈອນທ່ອງທ່ຽວ ແລະ ການຂົນສົ່ງເຂົ້າສູ່ແຫລ່ງທ່ອງທ່ຽວໃນພື້ນທີ່ເຂດການພັດທະນາປະເພດພາຫານະທີ່ນັກທ່ອງທ່ຽວໃຊ້ໃນການເດີນທາງຫລືຜ່ານການບໍລິການຂອງບ/ສນຳທ່ຽວ ຂົນສົ່ງສາທາລະນະໃນນີ້ລວມທາງນ້ຳທາງອາກາດ ພ້ອມດ້ວຍເສັ້ນທາງທີ່ໃຊ້ເພື່ອເຂົ້າມາໃນວົງຈອນຈຸດໝາຍປາຍທາງທ່ອງທ່ຽວອະນຸລັກ ແລະ ອື່ນໆ

8. ຮ່າງແຜນສົ່ງເສີມວັດທະທຳ ແລະ ປົກປັກຮັກສາສິ່ງແວດລ້ອມ

- ຟື້ນຟູສິລະປະວັດທະນະທຳອັນດີງາມໃນພື້ທີ່ເຂດພັດທະນາຈຸດໝາຍປາຍທາງທ່ອງທ່ຽວອະນຸລັກ: ການຟ້ອນ ການລຳ ທັດຖະກຳ ທັກສານ ຍົບແສ່ວ ປຸງແຕ່ງ ແລະ ອື່ນໆ

- ຍົກລະດັບປັບປຸງສິລະປະວັດທະທຳດັ່ງກ່າວທີ່ມີຢູ່ໃນພື້ນທີ່ໃຫ້ໄດ້ມາດຕະຖານ ແລະ ຄຸນນະພາບເປັນທີ່ຍອມຮັບຂອງຜູ້ມາທ່ຽວຊົມ

- ສຶກສາອົບຮົມປູກຈິດສຳນຶກໃຫ້ຜູ້ເຮັດວຽກບໍລິການທ່ອງທ່ຽວ ແລະ ການຂົນສົ່ງສາທາລະນະເຫັນຄວາມສຳຄັນຂອງການທ່ອງທ່ຽວ ຄວາມປອດໄພ ເລື່ອງສຸຂາອະນາໄມ ແລະ ການບໍລິການ

9. ຮ່າງ ນະໂຍບາຍ-ແຜນຍຸດທະສາດແລະແຜນປະຕິບັດ-ຂໍ້ກຳນົດກົດລະບຽບຂອງແຂວງ-ນະຄອນຫລວງ

- ການຮ່າງນະໂຍບາຍເປັນຂັ້ນຕ່ອນສຸດທ້າຍພາຍຫລັງ ໄດ້ວິໄຈຂໍ້ມູນຕ່າງໆທີ່ໄດ້ມາຈາກແຜນການດັ່ງກ່າວມາຂ້າງເທິງນັ້ນ ນະໂຍບາຍດັ່ງກ່າວຈະເປັນແນວທາງປະຕິບັດ ແລະ ເພື່ອສ້າງແຜນຍຸດທະສາດ ແຜນປະຕິບັດ ແລະ ການຄຸ້ມຄອງບໍລິຫານການພັດທະນາຈຸດໝາຍປາຍທາງທ່ອງທ່ຽວຂອງແຂວງ-ນະຄອນຫລວງ.

- ນະໂຍບາຍທີ່ກຳນົດອອກມານັ້ນຈະຕ້ອງສາມາດປະຕິບັດໄດ້ ໜັກແໜ້ນເອື້ອອຳນວຍໃຫ້ແກ່ການພັດທະນາຈຸດໝາຍປາຍທາງທ່ອງທ່ຽວອະນຸລັກຂອງແຂວງ-ນະຄອນຫລວງໃຫ້ເກີດຄວາມຍືນຍົງ ປົກປັກຮັກສາອະນຸລັກຊັບພະຍາກອນທ່ອງທ່ຽວສິ່ງແວດລ້ອມໃນພື້ນທີ່ເຂດພັດທະນາ

- ນະໂຍບາຍດັ່ງກ່າວຈະຕ້ອງຜ່ານກອງປະຊຸມສະພາຮ່ວມມື ປະກອບຄຳຄິດເຫັນປ່ຽນແປງດັດແກ້ ຖ້າມີຄວາມຈຳເປັນ ແລະ ຮັບຮອງເອົາເປັນທາງການໂດຍສະມາຊິກຂອງສະພາ ແລະ ນຳສະໜີຄະນະປົກຄອງທີ່ກ່ຽວຂ້ອງເພື່ອຮັບຊາບ ແລະ ຮັບຮອງ ນະໂຍບາຍທີ່ໄດ້ມານັ້ນ ຈະຕ້ອງມີການ

ທົບທວນດັດແກ້ປ່ຽນແປງຕາມສະພາບການແວດລ້ອມ ແລະ ນະໂຍບາຍຂອງລັດຖະບານ ແລະ ການປົກຄອງແຂວງ-ນະຄອນຫລວງໃນແຕ່ລະໄລຍະ

- ການສ້າງຂໍ້ກຳນົດກົດລະບຽບຕ່າງໆເປັນມາດຕະການຄຸ້ມຄອງບໍລິຫານສົ່ງເສີມ ແລະ ພັດທະນາຈຸດໝາຍປາຍທາງທ່ອງທ່ຽວໃຫ້ບັນລຸຜົນຕາມເປົ້າໝາຍຂໍ້ກຳນົດກົດລະບຽບແມ່ນກ່ຽວພັນກັບພື້ນທີ່ເຂດພັດທະນາໂດຍລວມ ກ່ຽວພັນກັບກຸ່ມບໍລິການ,ການປົກປັກຮັກສາອະນຸລັກສິ່ງແວດລ້ອມ ຄວາມປອດໄພແລະອື່ນໆດັ່ງນີ້ເປັນຕົ້ນ

10. ຮ່າງແຜນການຕິດຕາມ-ກວດກາ ແລະ ປະເມີນຜົນ

- ການກວດກາຕ້ອງດຳເນີນການຕາມຫລັກສາກົນເຊັ່ນ: ກວດກາດ້ານເສດຖະກິດ(ລັດ,ລວມໝູ່ ແລະບຸກຄົນ),ດ້ານຜົນກະທົບ ດ້ານສິ່ງແວດລ້ອມແລະກາຍະພາບຂອງພື້ນທີ່,ດ້ານຄວາມພໍໃຈ ຂອງປະຊາຊົນໃນພື້ນທີ່ເຂດພັດທະນາ,ຄວາມພໍ່ໃຈຂອງນັກທ່ອງທ່ຽວແລະອື່ນໆ...
    - ການກວດກາຕ້ອງມີເປົ້າໝາຍດັ່ງຕໍ່ໄປນີ້:
        - ✓ ກວດກາຕາມລະບຽບຫັລການການທຸກໆ 4 ເດືອນ
        - ✓ ກວດກາບາງສ່ວນທີ່ໄດ້ຮັບຜົນກະທົບຫລືຖືກທຳລາຍ
        - ✓ ກວດກາຕາມການສະເໜີຂອງສູນກາງ,ການສະເໜີຂອງແຂວງ-ນະຄອນຫລວງຂອງປະຊາຊົນຫລືຊຸມຊົມທີ່ອາໄສຢູ່ໃນພື້ນທີ່ເຂດພັດທະນາ
        - ✓ ກວດການຕາມການສະເໜີຂອງນັກທ່ອງທ່ຽວພາຍໃນແລະຕ່າງປະເທດ.

ພາກທີ IV

ຕາຕະລາງປະຕິບັດແຜນຍຸດທະສາດພັດທະນາ

ຈຸດໝາຍປາຍທາງທ່ອງທ່ຽວອະນຸລັກ ₭2016 - 2025

1 ສຳລັບປີ₭2016 - 2020#

ລ/ດ	ການຈັດຕັ້ງປະຕິບັດ	ເຫດຜົນ	ເວລາປະຕິບັດ	ໜ່ວຍງານປະຕິບັດ	ພາກສ່ວນສະໜັບສະໜູນ	ທຶນສະໜັບສະໜູນ
1.	ໂຄງການຈັດຕັ້ງກອງປະຊຸມເປີດກວ້າງໂດຍການເຂົ້າຮ່ວມຂອງຂະແໜງການລັດທີ່ກ່ຽວຂ້ອງ ພາກສ່ວນທຸລະກິດອຸດສາຫະກຳທ່ອງທ່ຽວວິທະຍາໄລ ມະຫາວິທະຍາໄລ ແລະ ບຸກຄົນທີ່ມີຄວາມສົນໃຈ...	-ຮັບຮູ້ແຜນແມ່ບົດ -ລະດົມຄຳຄິດເຫັນ ແລະຄວາມຮ່ວມມືແລະເຂົ້າຮ່ວມເປັນສະມາຊິກຂອງສະພາຮ່ວມມືແລະໜ່ວຍງານປະຕິບັດຕ່າງໆ # #	12/2016	ກ/ຊ ຖວທ -ກົມພັດທະນາ -ພະແນກ ຖວທ ແຂວງ-ນະຄອນຫລວງ	-ກົມພັດທະນາການທ່ອງທ່ຽວ -ສະມຄົມທຸລະກິດທ່ອງທ່ຽວ	ງົບປະມານແຫ່ງລັດ
2.	ໂຄງການຈັດຕັ້ງສະພາຮ່ວມມືເພື່ອພັດທະນາຈຸດໝາຍປາຍທາງທ່ອງທ່ຽວອະນຸລັກ	ເພື່ອດຳເນີນວຽກງານຕ່າງໆແນໃສ່ສ້າງແຜນຍຸດທະສາດພັດທະນາການທ່ອງທ່ຽວອະນຸລັກ	1-2/2017	ກ/ຊ ຖວທ ພະແນກ ຖວທ ແຂວງ-ນະຄອນຫລວງ	ກົມພັດທະນາການທ່ອງທ່ຽວ ພະແນກ ຖວທ ແຂວງ-ນະຄອນຫລວງ	
3.	ໂຄງການສຶກສາຄວາມຕ້ອງການຝຶກອົບຮົມ	- ດ້ານວິຊາການໃຫ້ໜ່ວຍປະຕິບັດງານ -ປູກຈິດສຳນຶກໃຫ້ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ລັດ-ທຸລະກິດທ່ອງທ່ຽວ ແລະປະຊາຊົນ	3-5/2017	ກ/ຊ ຖວທ ພະແນກ ຖວທ ແຂວງ-ນະຄອນຫລວງ	ກົມພັດທະນາການທ່ອງທ່ຽວ ພະແນກ ຖວທ ແຂວງ-ນະຄອນຫລວງ	

4.	ໂຄງການພັດທະນາວົງ ອນທ່ອງທ່ຽວຕາມຮູບ ແບບຂ້າງເທິງຫລືຮູບ ແບບໃໝ່ທີ່ດີກວ່າ	-ເສັ້ນທາງວົງຈອນ -ຈຸດແວ່ຊົມຫລືດຳເນີນ ກິດຈະກຳ ແລະອື່ນໆ -ຄວາມພ້ອມແລະສົນ ໃຈຂອງປະຊາຊົນໃນ ພື້ນທີ່ພັດທະນາ	6/2017	ໜ່ວຍປະຕິ ບັດງານ	ສະພາຮ່ວມມື ພັດທະນາຈຸດ ໝາຍປາຍ ທາງທ່ອງທ່ຽວ ແຂວງ9ນະ ຄອນຫລວງ	ງົບປະມານ ແຫ່ງລັດ
5.	ໂຄງສຶກສາຄົ້ນຄວ້າຂໍ້ ມູນຂ່າວສານແລະ ການ ຕະຫລາດ	-ສຶກສາວິໄຈທີ່ມາທີ່ໄປ ຂອງນັກທ່ອງທ່ຽວປະ ເພດອາຍຸສັນຊາດການ ເດີນທາງແລະພຶດຕິກຳ ອື່ນໆຂອງນັກທ່ອງທ່ຽວ ຄວາມຕ້ອງການ ຄວາມສົນໃຈ...	8/2017	ໜ່ວຍປະຕິ ບັດງານ	ສະພາຮ່ວມມື ພັດທະນາຈຸດ ໝາຍປາຍ ທາງທ່ອງທ່ຽວ ແຂວງ-ນະ ຄອນຫລວງ	ງົບປະມານ ແຫ່ງລັດ
6.	ໂຄງການສຳຫລວດສິ່ງ ດຶງດູດແລະກິດຈະກຳ ຕ່າງໆ	-ດ້ານທຳມະຊາດ ວັດ ທະນະທຳ -ກິດຈະກຳ:ບຸນປະເພນີ ເທດສະການ ແລະ ອື່ນໆທີ່ນັກທ່ອງທ່ຽວ ສົນໃຈແລະສາມາດເຂົ້າ ຮ່ວມໄດ້	9-12/2017	ໜ່ວຍປະຕິ ງານ	ສະພາຮ່ວມມື ພັດທະນາຈຸດ ໝາຍປາຍ ທາງທ່ອງທ່ຽວ ແຂວງ-ນະ ຄອນຫລວງ	ງົບປະມານ ແຫ່ງລັດ
7.	ໂຄງການສຳຫລວດໂຄງ ລ່າງພື້ນຖານ ແລະ ການຂົນສົ່ງ	-ເສັ້ນທາງທ່ອງທ່ຽວວົງ ຈອນ,ສະພາບ ຄວາມ ປອດໄພ ຄວາມສະ ດວກ... - ພາຫານະຂົນສົ່ງ ປະ ເພດ ຄຸນນະພາບ ພາກສ່ວນໃຫ້ບໍລິການ ແລະອື່ນໆ#	9-12/2017	ໜ່ວຍປະຕິ ງານ	ສະພາຮ່ວມມື ພັດທະນາຈຸດ ໝາຍປາຍ ທາງທ່ອງທ່ຽວ ແຂວງ-ນະ ຄອນຫລວງ	ງົບປະມານ ແຫ່ງລັດ

8	ໂຄງການສົ່ງເສີມວັດທະນະທຳ ແລະ ປົກປັກຮັກສາສິ່ງແວດລ້ອມ	-ຍົກລະດັບກິດກຳວັດທະນະທຳເຂົ້າສູ່ຄຸນນະພາບໃໝ່ -ສ້າງແວດລ້ອມທີ່ດີງົດງາມ ສະອາດ ປອດໄພແລະອື່ນໆ	1-2/2017	ໜ່ວຍປະຕິບັດງານ	ສະພາຮ່ວມມືພັດທະນາຈຸດໝາຍປາຍທາງທ່ອງທ່ຽວແຂວງ-ນະຄອນຫລວງ	ງົບປະມານແຫ່ງລັດ
9	ໂຄງການຮ່າງນະໂຍບາຍ-ແຜນຍຸດທະສາດພັດທະນາຈຸດໝາຍປາຍທາງທ່ອງທ່ຽວອະນຸລັກ ແລະແຜນປະຕິບັດ	ຮ່າງນະໂຍບາຍ ແຜນຍຸດທະສາດ ແຜນປະຕິບັດບົນພື້ນຖານຄຳຄິດເຫັນຂອງສາມະຊາກສະພາຮ່ວມມື ຂໍ້ມູນທີ່ໄດຈາກການສຳຫລວດວິໄຈໃນໂຄງການຕ່າງໆ ຂ້າງເທິງນັ້ນ	1-2/2017	ໜ່ວຍປະຕິບັດງານ	ສະພາຮ່ວມມືພັດທະນາຈຸດໝາຍປາຍທາງທ່ອງທ່ຽວແຂວງ-ນະຄອນຫລວງ	ງົບປະມານແຫ່ງລັດ
10	ໂຄງການສ້າງແຜນຕິດຕາມກວດກາແລະປະເມີນຜົນການພັດທະນາ	ເພື່ອສືບຕໍ່ການພັດທະນາເພື່ອປັບປຸງດັດແກ້ແຜນພັດທະນາເພື່ອຫລີກເວັ້ນຜົນກະທົບດ້ານລົບ	3/2017	ໜ່ວຍປະຕິບັດງານ	ສະພາຮ່ວມມືພັດທະນາຈຸດໝາຍປາຍທາງທ່ອງທ່ຽວແຂວງ-ນະຄອນຫລວງ	ງົບປະມານແຫ່ງລັດ

2. ສຳລັບປີ 2021 - 2025

ພາຍຫລັງສິ້ນສຸດການຈັດຕັ້ງປະຕິບັດແຜນການ 5 ປີ ໄລຍະໜຶ່ງ(2016-2020) ແລະ ສຳເລັດການປະເມີນຜົນໃນທຸກດ້ານ ສະພາຮ່ວມມືພັດທະນາຈຸດໝາຍປາຍທາງທ່ອງທ່ຽວທ່ອງທ່ຽວຈະຕ້ອງສ້າງແຜນປະຕິບັດ 5 ປີ ໄລຍະ II 2021 - 2025 ຕາມສະພາວະຄວາມເປັນຈິງ ບົນພື້ນຖານແນວທາງນະໂຍບາຍການພັດທະນາຈຸດໝາຍປາຍທາງທ່ອງທ່ຽວ ຄວາມຕ້ອງການ ໃນໄລຍະໃໝ່ຂອງຕະຫລາດທ່ອງທ່ຽວສາກົນກໍຄືຂອງນັກທ່ອງທ່ຽວນັ້ນເອງໂດຍລວມ

ຢ່າງໃດກໍຕາມ ແຜນປະຕິບັດໄລຍະ II ໃນຂັ້ນພື້ນຖານມີຈຸດປະສົງດັ່ງຕໍ່ໄປນີ້:

- ສືບຕໍ່ຈັດຕັ້ງປະຕິບັດບັນດາໂຄງການຕ່າງໆທີ່ຍັງບໍ່ສຳເລັດຍ້ອນເຫດຜົນຕ່າງໆນາໆ
- ປັບປຸງປ່ຽນແປງແກ້ໄຂບັນດາໂຄງການຕ່າງໆທີ່ເຫັນວ່າຍັງບໍ່ຕອບສະໜອງໄດ້ ຕາມຄວາມຕ້ອງການຂອງຕະຫລາດທ່ອງທ່ຽວພາຍໃນແລະສາກົນ
- ຍົກລະດັບວົງຈອນຈຸດໝາຍປາຍທາງທ່ອງທ່ຽວສູ່ຄຸນນະພາບແລະມາດຕະຖານໃໝ່
- ສືບຕໍ່ບັນດາໂຄງການຕ່າງທີ່ເປັນປະໂຫຍດຕໍ່ເນື່ອງເຊັ່ນ: ໂຄງການອົບຮົມ,ໂຄງ ການສົ່ງດຶງດູດ ແລະ ກິດຈະກຳ ໂຄງການກວດກາ ແລະປເມີນຜົນ ໂຄງການ ນະໂຍບາຍ-ຂໍກຳນົດກົດລະບຽບ ແລະອື່ນໆ
- ກຳນົດວົງຈອນຈຸດໝາຍປາຍທາງທ່ອງທ່ຽວຕື່ມຕາມເງື່ອນໄຂແລະຄວາມອາດສາ ມາດຂອງທ້ອງຖິ່ນ

#

#

#

#

ເອກະສານຊ້ອນທ້າຍ

1. ເອກະສານສ້າງຕັ້ງສະພາຮ່ວມມືພັດທະນາຈຸດໝາຍປາຍທາງທ່ອງທ່ຽວ

   ອະນຸລັກລາວ..... ທີ I

2. ເອກະສານພາກສ່ວນລັດທີ່ມີສ່ວນກ່ຽວຂ້ອງ..... ທີ II-III

   - ✓ ລະດັບສູນກາງ (II)
   - ✓ ລະດັບແຂວງ-ນະຄອນຫລວງ(III)

3. ເອກະສານພາກສ່ວນທຸລະກິດບໍລິການທ່ອງທ່ຽວທີ່ມີສ່ວນກ່ຽວຂ້ອງ.....ທີ IV

ເອກະສານຊ້ອນທ້າຍ I

ລາຍຊື່ກະຊວງແລະອົງການແຫ່ງລັດທີ່ມີສ່ວນກ່ຽວຂ້ອງ

ຊື່ຂະແໜງການ	ເຫດຜົນ	ຜົນປະໂຫຍດ
ກ/ຊ ຖວທ	• ເປັນເຈົ້າການໃນວຽກງານທ່ອງທ່ຽວແລະທຸລະກິດທ່ອງທ່ຽວ • ສົ່ງເສີມວັດທະນະທຳ ປົກປັກຮັກສາມໍລະດົກ • ໂຄສະນາການທ່ອງທ່ຽວຢູ່ພາຍໃນແລະຕ່າງປະເທດ	• ສ້າງລາຍຮັບໃຫ້ສະຖານທີ່ທ່ອງທ່ຽວອັດທະນະທຳມໍລະດົກຕ່າງໆເພື່ອເປັນທຶນຮອນໃຫ້ແກ່ການອະນຸລັກ ປົກປັກຮັກສາ
ກ/ຊ ກະສິກຳ ແລະ ປ່າໄມ້	• ຮ່ວມກັບຂະແໜງການທ່ອງທ່ຽວສ້າງມູນຄ່າເພີ່ມໃຫ້ແກ່ເຂດປ່າສະຫງວນ • ສົ່ງເສີມຊຸກຍູ້ການປູກຝັງລ້ຽງສັດສະໜອງໃຫ້ອຸດສາຫະກຳທ່ອງທ່ຽວ • ລົບລ້າງຄວາມທຸກຍາກໃນເຂດຊົນນະບົດຫ່າງໄກສອກຫລີກ	• ສ້າງລາຍໄດ້ຈາກການທ່ອງທ່ຽວໃຫ້ເປັນທຶນຮອນເພື່ອການປົກປັກຮັກສາອະນຸລັກປ່າໄມ້ທຳມະຊາດ • ສ້າງວຽກງານແລະລາຍໄດ້ໃຫ້ປະຊາຊົນຜູ້ເຮັດການຜະລິດແລະຫລຸດຜ່ອນການນຳເຂົ້າທີ່ບໍ່ຈຳເປັນ
ກ/ຊ ການເງິນ	• ສົ່ງເສີມການທ່ອງທ່ຽວແລະອຸດສາຫະກຳທ່ອງທ່ຽວດ້ວຍໄມ້ງັດເສດຖະກິດການເງິນໃຫ້ທຸລະກິດທ່ອງທ່ຽວແລະອຸດສາຫະກຳທ່ອງທ່ຽວລາວສາມາດແຂ່ງແຍ່ງແຂ່ງຂັ້ນກັບປະເທດອື່ນໆໄກ້ຄຽງ ພາກພື້ນເປັນຕົ້ນ • ສະໜອງທຶນຮອນໃຫ້ທຸລະກິດລາວຂະໜາດນ້ອຍ-ກາງເພື່ອຂະຫຍາຍແລະປັບປຸງທລະກິດແນໃສ່ສົ່ງເສີມການທ່ອງທ່ຽວລາວ • ສະໜອງງົບປະມານໃຫ້ຂະແໜງການທ່ອງທ່ຽວໃຫ້ພຽງພໍກັບແຜນພັດທະນາ	• ລາຍໄດ້ ແຫ່ງຊາດເພີ່ມຂຶ້ນ ໄລຍະຍາວທາງດ້ານເງິນຕາຕ່າງປະເທດ • ຂັບເຄື່ອນການພັດທະນາເສດຖະກິດສັງຄົມໃຫ້ຍືນຍົງ • ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນໂດຍຜ່ານຂະບວນສົ່ງເສີມການທ່ອງທ່ຽວໃຫ້ເຕີບໂຕຂະຫຍາຍຕົວໃນທົ່ວປະເທດ
ກ/ຊ ແຜນການ ແລະ ການລົງທຶນ	• ສົ່ງເສີມແລະເພີ່ມທະວີການລົງທຶນໃນຂະແໜງບໍລິການທ່ອງທ່ຽວແລະອຸດສາ	• ພັດທະນາສິ່ງອຳນວຍຄວາມສະດວກໃນການເດີນທາງ

	ທະກຳທ່ອງທ່ຽວຈາກພາຍໃນແລະຕ່າງປະເທດ • ຍາດແຍ່ງຖ່າຍທອດເຕັກໂນໂລຊີແລະການຮຽນຮູ້ສິ່ງໃໝ່ໆກັບຕ່າງປະເທດ	ທ່ອງທ່ຽວແລະເພີ່ມລາຍໄດ້ແຫ່ງຊາດ ສ້າງການງານໃຫ້ສັງຄົມ... • ສ້າງລາຍໄດ້ແຫ່ງຊາດ • ສ້າງວຽກສ້າງງານໃໝ່ໃຫ້ສັງຄົມ
ກ/ຊ ປ.ກ.ສ	• ອຳນວຍຄວາມສະດວກໃຫ້ນັກທ່ອງທ່ຽວໃນການເດີນທາງເຂົ້າ-ອອກ/ອອກ-ເຂົ້າ • ປ້ອງກັນ ຄວາມຄວາມສະຫງົບແລະເປັນລະບຽບປອດໄພ ຢູ່ສະຖານທີ່ທ່ອງທ່ຽວແລະການສັນຈອນທ່ອງທ່ຽວໃນຕົວເມືອງຕ່າງໆ	• ສ້າງຄວາມເຊື່ອໝັ້ນແລະອົບອຸ່ນໃຫ້ນັກທ່ອງທ່ຽວ • ສປປລາວເມືອງໜ້າທ່ຽວ • ນັກທ່ອງທ່ຽວຂະຫຍາຍຕົວ
ກ/ຊ ການຕ່າງປະເທດ	• ປະກອບສ່ວນຊ່ວຍໂຄສະນາດຶງດູດນັກທ່ອງທ່ຽວຢູ່ຕ່າງປະເທດ • ອຳນວຍຄວາມສະດວກໃນການອອກວີຊາໃຫ້ສະດວກວອງໄວ • ດຶງດູດການລົງທຶນການຮ່ວມໃຫ້ຂະແໜງການທ່ອງແລະອຸດສາຫະກຳທ່ອງທ່ຽວ	• ເພີ່ມທະວີການເດີນທາງຂອງນັກທ່ອງທ່ຽວໄປ ສປປລາວ • ເພີ່ມທະວີລາຍຮັບຈາກການອອກວີຊາ
ກ/ຊ ຊັບພະຍາກອນ ແລະ ສິ່ງແວດລ້ອມ	• ສ້າງສິ່ງແວດລ້ອມທີ່ດີປອດໄພພາຍໃນຕົວເມືອງຕ່າງແລະສະຖານທີ່ທ່ອງທ່ຽວຕ່າງໆ • ປົກປັກຮັກສາຊັບພະຍາກອນທ່ອງທ່ຽວທຳມະຊາດມໍເວດວິທະຍາແລະອື່ນໆ	• ເຮັດໃຫ້ສປປລາວເປັນປະເທດໜ້າທ່ຽວງົດງາມດຶງດູດ • ສ້າງລາຍໄດ້ເຂົ້າປະເທດ • ນັກທ່ອງທ່ຽວມາແລ້ວກໍຄືນມາອີກແລະເພີ່ມຂຶ້ນ
ກ/ຊ ສຶກສາ ແລະ ກິລາ	• ສຶກສາຄົ້ນຄວ້າວິໄຈຄວາມອາດສາມາດຂອງການທ່ອງທ່ຽວລາວ • ສ້າງຈິດສຳນຶກໃຫ້ນັກຮຽນນັກສຶກສາເປັນຮ◌ຸ◌ ່ນສືບສານມໍລະດົກວັດທະນະທຳທຳມະຊາດແລະອິດຄອງປະເພນີອັນດີງາມຂອງຊາດແລະປະຊາຊົ**ນ** • ສ້າງຈິດສຳນຶກອະນຸລັກທຳມະຊາດອລະສິ່ງແວດລ້ອມ... • ນຳເອົາເນື້ອໃນການທ່ອງທ່ຽວເຂົ້າໃນຫລັກສູດການສຶກສາແຕ່ອະນຸບານຮອດ	• ຊັບພະຍາກອນທ່ອງທ່ຽວທຳມະຊາດວັດທະນະທຳປະຫວັດສາດແລະສິ່ງແວດລ້ອມໄດ້ຮັບການປົກປັກຮັກສາອະນຸລັກສືບທອດໃຫ້ຄົນຮຸ່ນຕໍ່ໆໄປ • ເຮັດໃຫ້ການພັດທະນາການທ່ອງທ່ຽວຍືນຍົງ

	ວິທະຍາໄລ	
ກ/ຊ ໂຍທາ ແລະ ຂົນສົ່ງ	• ຈັດຕັ້ງລະບົບຂົນສົ່ງທີ່ເອື້ອອຳນວຍການເດີນທາງທ່ອງທ່ຽວສະດວກປອດໄພແຕ່ຕົວເມືອງຫາສະຖານທ່ອງທ່ຽວຫລັກ ແລະຈາກຕະຫລາດທ່ອງທ່ຽວຕ່າງປະເທດ(ການບິນ)ມາສູ່ ສປປລາວ ໂດຍກົງ • ສ້າງລະບົບບໍລິການຂົນສົ່ງທີ່ແນ່ນອນຊັດເຈນໂປ່ງໃສຮັບປະກັນມາດຕະຖານ ສຸຂາອະນາໄມຄວາມປອດໄພສະດວກວອງໄວ • ພັດທະນາເສັ້ນທາງຄົມມະນາຄົມເຂົ້າເຖິງບ້ານປະຊາຊົນສະຖານທີ່ທ່ອງທ່ຽວ ໃຫ້ສະດວກສະບາຍແນໃສ່ສົ່ງເສີມເສດຖະກິດສັງຄົມແຂວງ-ນະຄອນຫລວງ ແລະການທ່ອງທ່ຽວໄປໃນຂອບເຂດທົ່ວປະເທດ	• ສ້າງຄວາມສົນໃຈໃຫ້ນັກທ່ອງທ່ຽວໄດ້ໄປທ່ຽວໄກຂຶ້ນເປັນຫລາຍວັນຕາມຄວາມຕ້ອງການ • ເສດຖະກິດການຄ້າການຜະລິດໃນທ້ອງຖິ່ນດີຂຶ້ນ • ລາຍໄດ້ປະຊາຊົນດີຂຶ້ນ • ຈຳນວນນັກທ່ອງທ່ຽວຕາມສະຖານທີ່ຕ່າງໆຫລາຍຂຶ້ນ
ກ/ຊ ໄປສະນີ	• ຈັດຕັ້ງລະບົບໄປສະນີໃຫ້ກວ້າງຂວາງວ່ອງໄວ,ການບໍລິການສະດວກສະບາຍຕາມເມືອງໆແລະຢູ່ສະຖານທ່ອງທ່ຽວຫລັກໃນປະເທດເພື່ອສົ່ງເສີມໃຫນັກທ່ອງທ່ຽວໃຊ້ໄປສະນີລາວຫລາຍຂຶ້ນ • ຜະລິດສະແຕມລາວທີ່ສົ່ງເສີມວັດທະນາທຳທຳມະຊາດແລະສິ່ງແວດລ້ອມບູນເທດສະການແລະວິທີຊີວິດຂອງປະຊາຊົນບັນດາເຜົ່າ	• ເພີ່ມຫລາຍຮັບໃຫ້ໄປສະນີລາວໃນລະດັບອັນແນ່ນອນ • ເປັນການໂຄສະນາສົ່ງເສີມການທ່ອງທ່ຽວຂອງປະເທດຜ່ານໄປສະນີບັດແລະສະແຕມລາວ • ສ້າງຄວາມສົນໃຫ້ຜູ້ທີ່ຍັງບໍ່ໃຫ້ມາທ່ຽວລາວ
ກ/ຊ ສາທາລະນະສຸກ	• ແຈ້ງຕັກເຕືອນແນະນຳນັກທ່ອງທ່ຽວກ່ຽວກັບການລະບາດຂອງພະຍາດໃນເຂດເມືອງແຂວງ-ນະຄອນຫລວງຕ່າງໆຢ່າງທັນການ • ໃຫ້ການຊ່ວຍເຫລືອນັກທ່ອງທ່ຽວຢ່າງທັນການໃນກໍລະນີສຸກເສີນແລະອື່ນໆ • ຮັບປະກັນດ້ານສຸຂາອະນາໄມໃນສະຖານທີ່ທ່ອງທ່ຽວອາຫານການກິນນ້ຳສະອາດ	• ສ້າງຄວາມໝັ້ນໃຈໃຫ້ນັກທ່ອງທ່ຽວໃນການເດີນທາງທ່ອງທ່ຽວຢູ່ສປປລາວ • ຊົມໃຊ້ຜະລິດຕະພັນລາວຫລາຍຂຶ້ນ:ອາຫານສົ້ມປາ ຜັກໝາກໄມ້ທີ່ປອດສານພິດ

ກ/ຊ ການຄ້າ ແລະ ອຸດສາຫະກຳ	• ໃຫ້ການສະໜັບສະໜູນການຄ້າຂະໜາດຮາກຖານ,ນ້ອຍແລະກາງ ສົ່ງເສີມການປຸ່ງແຕ່ງ ຫັດຖະກຳແລະການຜະລິດຫັດຖະກຳແລະເຄື່ອງທີ່ລະນຶກໃຫ້ໄດ້ມາດຕະຖານຄຸນນະພາບທີ່ຕະຫລາດທ່ອງທ່ຽວຕ້ອງການ • ຄຸ້ມຄອງລາຄາສະບຽງອາຫານຢ່າງຮັດກຸມໂປ່ໄສເປັນທຳ • ສົ່ງເສີມການຜະລິດພາຍໃນໃຫ້ຫລາຍຂຶ້ນເປັນຕົ້ນແມ່ນການຜະລິດຂອງປະຊາຊົນ ການປູກຝັງລ້ຽງສັດ	• ສ້າງວຽກສ້າງງານແລະສ້າງລາຍໄດ້ໃຫ້ປະຊາຊົນຂັ້ນຮາກຖານ • ຫລຸດຜ່ອນການນຳເຂົ້າທີ່ບໍ່ຈຳເປັນຈາກຕ່າງປະເທດປະຢັດເງິນຕາຕ່າງປະເທດທີ່ໄດ້ມາຈາກການທ່ອງທ່ຽວ • ຊ່ວຍໃຫ້ທຸລະກິດທ່ອງທ່ຽວແລະອຸດສາຫະກຳທ່ອງທ່ຽວລາວສາມາດແຂ່ງຂັນກັບປະເທດໄກ້ແລະໃນພາກພື້ນ
ກ/ຊ ແຮງງານສະຫວັດດີການສັງຄົມ	• ສ້າງສູນອົບຮົມວິຊາຊີບເພື່ອພັດທະນາຊັບພະຍາກອນມະນຸດໃຫ້ການທ່ອງທ່ຽວແລະອຸດສາຫະກຳທ່ອງທ່ຽວ • ພັດທະນາສີມືແຮງງານທາງດ້ານປະລິມານແລະຄຸນນະພາບຕອບສະໜອງໃຫ້ທຸລະກິດທ່ອງທ່ຽວແລະອຸດສາຫະກຳທ່ອງທ່ຽວໃຫ້ພຽງພໍ	• ສ້າງວຽກສ້າງງານໃຫ້ການທ່ອງທ່ຽວແລະອຸດສາຫະກຳ • ຍົກລະດັບຄຸນນະພາບການບໍລິການ ລາຍຮັບ ທຸລະກິດແລະສ່ວນບຸກຄົນດີຂຶ້ນ • ລາຍຮັບແຫ່ງຊາດເພີ່ມຂຶ້ນພ້ອມໆກັນໃນລະດັບແນ່ນອນ • ນັກທ່ອງທ່ຽວພໍໃຈໃນລາຄາບໍລິການເຮັດໃຫ້ການທ່ອງທ່ຽວສາມາດແກ່ງແຍ່ງແຂ່ງຂັ້ນກັບປະເທດອື່ນໆໃນພາກພື້ນແລະໄກ້ຄຽງ
ກ/ຊ ໂທລະຄົມມະນາຄົມແລະການສື່ສານ	• ສ້າງເຄືອຂ່າຍຄົມະນາຄົມແລະໄອທີທີ່ສາມາດເຊື່ອມຍົງຢູ່ພາຍໃນແລະຕ່າງປະເທດໄດ້ຢ່າງສະດວກສະບາຍວອງໄວໄດ້ໃນທຸກແຫ່ງໃນສປປລາວ	• ເຮັດໃຫ້ນັກທ່ອງທ່ຽວສາມາດຕິດພົວພັນກັບເພື່ອນຄອບຄົວແລະອື່ນໆໄດ້ຢ່າງທັນການແລະຕາມຄວາມຕ້ອງການ • ນັກທ່ອງທ່ຽວຈະຊົມໃຊ້ຫລາຍຂຶ້ນອັນເນື່ດໃຫ້ລາຍໄດ້ຂອງຂະແໜງການດັ່ງ

		ກ່າວດີຂຶ້ນ • ນັກທ່ອງທ່ຽວຈະເດີນທາງໄປສູ່ເຂດຊົນນະບົດຫ່າງໄກສອກຫລີກຫລາຍຂຶ້ນ
ອົງການສະຫະພັນແມ່ຍິງ	• ສົ່ງເສີມຊຸກຍຸໃຫ້ຜູ້ຍິງເຂົ້າຮ່ວມການພັດທະນາການທ່ອງທ່ຽວຫລາຍຂຶ້ນ • ສົ່ງເສີມຮີດຄອງປະເພນີວັດທະນະທຳອັນດີງາມແລະການນຸ່ງຖືແບບລາວແລະເປັນເອກະລັກຂອງທ້ອງຖິ່ນ	• ເພື່ອໃຫ້ມີວຽກງານທຳ ມີຫລາຍໄດ້ຊ່ວຍຄອບຄົວແລະຊ່ວຍຕົນເອງ • ຮັກສາໃວ້ຊຶ່ງມູນເຊື້ອອັນດີງາມຂອງແມ່ຍິງລາວ • ເຮັດໃຫ້ການພັດທະນາຍືນຍົງ
ອົງການຊາວໜຸ່ມ	• ສ້າງຂະບວນການແລະກິດຈະກຳຕ່າງໆ ສົ່ງເສີມການທ່ອງທ່ຽວ • ເຂົ້າຮ່ວມຂະບວນການພັດທະນາທ່ອງທ່ຽວຂັ້ນບ້ານໃນກິດຈະກຳຕ່າງໆ	• ຄວາມເປັນລະບຽບຮຽບຮ້ອຍແລະຄວາມສະຫງົບຂັ້ນບ້ານ • ມີລາຍໄດ້ຈາກການທ່ອງທ່ຽວໃນພື້ນທີ່ • ມີວຽກງານໄດ້ເຮັດ
ເຖົ້າແກ່ແມ່ບ້ານ	• ໃຫ້ຂໍ້ມູນທ່ອງທ່ຽວ:ປະຫວັດບ້ານ ທີ່ມາຂອງບ້ານແລະອື່ນໆ • ຖ່າຍທອດບົດຮຽນໃຫ້ຄົນຮຸ່ນຕໍ່ໄປດ້ານວັດທະນະທຳ ປະເພນີປະຕິບັດອັນດີງາມແລະມູນເຊື້ອອື່ນໆຂອງບ້ານ	• ນັກທ່ອງທ່ຽວສົນໃຈ • ການທ່ອງທ່ຽວບ້ານຂະຫຍາຍຕົວ • ຊີວິດການເປັນຢູ່ດີຂຶ້ນ

ເອກະສານຊ້ອນທ້າຍ II

ລາຍຊື່ພະແນກ ແລະ ຫ້ອງການທີ່ມີສ່ວນກ່ຽວຂ້ອງ
ຂັ້ນແຂວງ-ນະຄອນຫລວງ ແລະ ເມືອງ

ຊື່ຂະແໜງການ	ເຫດຜົນ	ຜົນປະໂຫຍດ
ພ/ນ ຖວທ	• ເປັນເຈົ້າການໃນວຽກງານທ່ອງທ່ຽວແລະທຸລະກິດທ່ອງທ່ຽວຂັ້ນແຂວງ-ນະຄອນຫລວງ • ສົ່ງເສີມວັດທະນະທຳ ປົກປັກຮັກສາມໍລະດົກ • ໂຄສະນາທ່ອງທ່ຽວ	• ສ້າງລາຍຮັບໃຫ້ສະຖານທີ່ວັດທະນະທຳມໍລະດົກຕ່າງໆ ເພື່ອເປັນທຶນຮອນໃຫ້ແກ່ການອະນຸລັກປົກປັກຮັກສາຂັ້ນແຂວງ-ນະຄອນຫລວງ
ພ/ນ ກະສິກຳ ແລະ ປ່າໄມ້	• ຮ່ວມກັບຂະແໜງການທ່ອງທ່ຽວສ້າງມູນຄ່າເພີ່ມໃຫ້ແກ່ເຂດປ່າສະຫງວນ • ສົ່ງເສີມຊຸກຍູ້ການປູກຝັງລ້ຽງສັດສະໜອງໃຫ້ອຸດສາຫະກຳທ່ອງທ່ຽວ • ລົບລ້າງຄວາມທຸກຍາກໃນເຂດຊົນນະບົດຫ່າງໄກສອກຫລີກ	• ສ້າງລາຍໄດ້ຈາກການທ່ອງທ່ຽວໃຫ້ເປັນທຶນຮອນເພື່ອການປົກປັກຮັກສາອະນຸລັກປ່າໄມ້ທຳມະຊາດ • ສ້າງວຽກງານແລະລາຍໄດ້ໃຫ້ປະຊາຊົນຜູ້ເຮັດການຜະລິດແລະຫລຸດຜ່ອນການນຳເຂົ້າທີ່ບໍ່ຈຳເປັນພາຍໃນແຂວງ-ນະຄອນຫລວງ
ພ/ນ ການເງິນ	• ສົ່ງເສີມການທ່ອງທ່ຽວແລະອຸດສາຫະກຳທ່ອງທ່ຽວດ້ວຍໄມ້ງົດເສດຖະກິດການເງິນໃຫ້ທຸລະກິດທ່ອງທ່ຽວແລະອຸດສາຫະກຳທ່ອງທ່ຽວລາວສາມາດແຂ່ງແຍ່ງແຂ່ງຂັ້ນກັບປະເທດອື່ນໆໄກ້ຄຽງ ພາກພື້ນເປັນຕົ້ນ • ສະໜອງທຶນຮອນໃຫ້ທຸລະກິດລາວຂະໜາດນ້ອຍ-ກາງເພື່ອຂະຫຍາຍແລະປັບປຸງທລະກິດແນໃສ່ສົ່ງເສີມການທ່ອງທ່ຽວລາວ • ສະໜອງງົບປະມານໃຫ້ຂະແໜງການທ່ອງທ່ຽວໃຫ້ພຽງພໍກັບແຜນພັດທະນາ	• ລາຍໄດ້ ຂອງແຂວງ-ນະຄອນຫລວງ ເພີ່ມຂຶ້ນໄລຍະຍາວທາງດ້ານເງິນຕາຕ່າງປະເທດ • ຂັບເຄື່ອນການພັດທະນາເສດຖະກິດສັງຄົມໃຫ້ຍືນຍົງ • ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນໂດຍຜ່ານຂະບວນການສົ່ງເສີມການທ່ອງທ່ຽວໃຫ້ເຕີບໂຕຂະຫຍາຍຕົວພາຍໃນແຂວງ-ນະຄອນຫລວງ
ພ/ນ ແຜນການ ແລະ ການ	• ສົ່ງເສີມແລະເພີ່ມທະວີການລົງທຶນໃນ	• ພັດທະນາສິ່ງອຳນວຍຄວາມ

ລິງທຶນ	ຂະແໜງບໍລິການທ່ອງທ່ຽວແລະອຸດສາຫະກຳທ່ອງທ່ຽວຈາກພາຍໃນແລະຕ່າງປະເທດ • ຍາດແຍ່ງຖ່າຍທອດເຕັກໂນໂລຊີແລະຮຽນຮູ້ກັບຕ່າງປະເທດ	ສະດວກໃນການເດີນທາງທ່ອງທ່ຽວແຂວງ-ນະຄອນຫລວງແລະເພີ່ມລາຍຮັບໃຫ້ແຂວງ-ນະຄອນຫລວງແລະສ້າງການງານໃຫ້ສັງຄົມ... • ສ້າງລາຍໄດ້ໃຫ້ແຂວງ-ນະຄອນຫລວງ • ສ້າງວຽກສ້າງງານໃໝ່ໃຫ້ສັງຄົມພາຍໃນແຂວງ-ນະຄອນຫລວງ
ພ/ນ ປ.ກ.ສ	• ອຳນວຍຄວາມສະດວກໃຫ້ນັກທ່ອງທ່ຽວໃນການເດີນທາງ • ປ້ອງກັນ ຄວາມສະຫງົບແລະຄວາມເປັນລະບຽບປອດໄພ ສະຖານທີ່ທ່ອງທ່ຽວແລະການສັນຈອນທ່ອງທ່ຽວໃນຕົວເມືອງຕ່າງໆຂອງແຂວງ-ນະຄອນຫລວງ	• ສ້າງຄວາມເຊື່ອໝັ້ນແລະອົບອຸ່ນໃຫ້ນັກທ່ອງທ່ຽວ • ແຂວງ-ນະຄອນຫລວງຈະກາຍເປັນເມືອງໜ້າທ່ຽວ • ນັກທ່ອງທ່ຽວຂະຫຍາຍຕົວ
ຫ້ອງການພົວພັນກັບຕ່າງປະເທດ	• ປະກອບສ່ວນຊ່ວຍໂຄສະນາດຶງດູດນັກທ່ອງທ່ຽວຢູ່ຕ່າງປະເທດ • ອຳນວຍຄວາມສະດວກໃນການອອກວີຊາໃຫ້ສະດວກວອງໄວ • ດຶງດູດການລົງທຶນການຮ່ວມມືໃຫ້ຂະແໜງການທ່ອງແລະອຸດສາຫະກຳທ່ອງທ່ຽວພາຍໃນແຂວງ-ນະຄອນຫລວງ	• ເພີ່ມທະວີການເດີນທາງຂອງນັກທ່ອງທ່ຽວເຂົ້າມາທ່ຽວແຂວງ-ນະຄອນຫລວງ • ເພີ່ມທະວີລາຍຮັບຈາກການຈາກທ່ອງທ່ຽວພາຍໃນແຂວງ-ນະຄອນຫລວງ
ພ/ນ ຊັບພະຍາກອນ ແລະ ສິ່ງແວດລ້ອມ	• ສ້າງສິ່ງແວດລ້ອມທີ່ດີປອດໄພສຳລັບການທ່ອງທ່ຽວພາຍໃນແຂວງ-ນະຄອນຫລວງ • ປົກປັກຮັກສາຊັບພະຍາກອນທ່ອງທ່ຽວຂອງແຂວງ-ນະຄອນຫລວງ	• ເຮັດໃຫ້ແຂວງ-ນະຄອນຫລວງເປັນໜ້າທ່ຽວ • ສ້າງລາຍໄດ້ເຂົ້າແຂວງ-ນະຄອນຫລວງ • ນັກທ່ອງທ່ຽວເພີ່ມຂຶ້ນ
ພ/ນ ສຶກສາ ແລະ ກິລາ	• ສຶກສາອົບຮົມນັກຮຽນໃຫ້ມີທັດສະນະທີ່ຖືກຕ້ອງຕ້ອນຮັບຊ່ວຍເຫລືອນັກທ່ອງທ່ຽວທີ່ເດີນທາງເຂົ້າມາທ່ຽວແຂວງ-ນະຄອນຫລວງ • ເປັນເຈົ້າພາບທີ່ດີຕ້ອນຮັບນັກທ່ອງທ່ຽວ	• ຊັບພະຍາກອນທ່ອງທ່ຽວທຳມະຊາດວັດທະນະທຳປະຫວັດສາດແລະສິ່ງແວດລ້ອມໄດ້ຮັບການປົກປັກຮັກສາອະນຸລັກສືບທອດໃຫ້ຄົນ

	• ສ້າງຈິດສຳນຶກໃຫ້ນັກຮຽນນັກສຶກສາເປັນຮ່ວມສືບສານມໍລະດົກວັດທະນະທຳມະຊາດແລະຮີດຄອງປະເພນີອັນດີງາມຂອງຊາດແລະປະຊາຊົນ • ນຳເອົາເນື້ອໃນການທ່ອງທ່ຽວເຂົ້າໃນຫລັກສູດການສຶກສາແຕ່ອະນຸບານຮອດວິທະຍາໄລ • ສຶກສາອົບຮົມການປົກປັກຮັກສາສິ່ງແວດລ້ອມແລະທຳມະຊາດ	ຮຸ່ນຕໍ່ໆໄປ • ເຮັດໃຫ້ການພັດທະນາການທ່ອງທ່ຽວຂອງແຂວງ-ນະຄອນຫລວງຍືນຍົງ
ພ/ນ ໂຍທາ ແລະ ຂົນສົ່ງ	• ຈັດຕັ້ງລະບົບຂົນສົ່ງທີ່ເອື້ອອຳນວຍການເດີນທາງທ່ອງທ່ຽວໄປສູ່ສະຖານທີ່ທ່ອງທ່ຽວສະດວກປອດໄພແຕ່ຕົວເມືອງຫາສະຖານທ່ອງທ່ຽວຫລັກແລະເຊື່ອມຕໍ່ກັບອື່ນໆທີ່ມີແຫລ່ງທ່ອງທ່ຽວແລະແຂວງໃກ້ຄຽງ • ສ້າງລະບົບບໍລິການຂົນສົ່ງທີ່ແນ່ນອນຊັດເຈນໂປ່ງໃສຮັບປະກັນມາດຕະຖານ ສຸຂາອະນາໄມຄວາມປອດໄພ • ພັດທະນາເສັ້ນທາງຄົມມະນາຄົມເຂົ້າເຖິງບ້ານປະຊາຊົນສະຖານທີ່ທ່ອງທ່ຽວໃຫ້ສະດວກສະບາຍແນໃສ່ສິ່ງເສີມເສດຖະກິດບ້ານແລະການທ່ອງທ່ຽວໄປພ້ອມໆກັນ	• ສ້າງຄວາມສົນໃຈໃຫ້ນັກທ່ອງທ່ຽວໄດ້ໄປທ່ຽວໄກຂຶ້ນເປັນຫລາຍວັນຕາມຄວາມຕ້ອງການ • ເສດຖະກິດການຄ້າການຜະລິດໃນທ້ອງຖິ່ນດີຂຶ້ນ • ລາຍໄດ້ປະຊາຊົນດີຂຶ້ນ • ຈຳນວນນັກທ່ອງທ່ຽວຕາມສະຖານທີ່ຕ່າງໆຫລາຍຂຶ້ນ
ພ/ນ ໄປສະນີ	• ຈັດຕັ້ງລະບົບໄປສະນີໃຫ້ກວ້າງຂວາງໄວການບໍລິການສະດວກສະບາຍຕາມເມືອງຕ່າງໆແລະຢູ່ສະຖານທ່ອງທ່ຽວຫລັກໃນແຂວງ-ນະຄອນຫລວງເພື່ອສົ່ງເສີມໃຫນັກທ່ອງທ່ຽວໃຊ້ໄປສະນີລາວຫລາຍຂຶ້ນ	• ເພີ່ມຫລາຍຮັບໃຫ້ໄປສະນີລາວໃນລະດັບແຂວງນະຄອນຫລວງແນ່ນອນ
ພ/ນ ສາທາລະນະສຸກ	• ແຈ້ງຕັກເຕືອນແນະນຳກ່ຽວກັບການລະບາດຂອງພະຍາດຕ່າງພາຍໃນແຂວງ-ນະຄອນຫລວງ • ໃຫ້ການຊ່ວຍເຫລືອນັກທ່ອງທ່ຽວຢ່າງ	• ສ້າງຄວາມໝັ້ນໃຈໃຫ້ນັກທ່ອງທ່ຽວໃນການເດີນທາງທ່ອງທ່ຽວຢູ່ແຂວງ-ນະຄອນຫລວງ

	ທັນການໃນກໍລະນີສຸກເສີນແລະອື່ນໆ • ຮັບປະກັນດ້ານສຸຂາອະນາໄມໃນສະຖານທີ່ທ່ອງທ່ຽວອາຫານການກິນນ້ຳສະອາດ	• ຊຸມໃຊ້ຜະລິດຕະພັນລາວຫລາຍຂຶ້ນ:ອາຫານສົ້ມປາ ຜັກໝາກໄມ້ທີ່ປອດສານພິດ ແລະອື່ນໆ
ພ/ນ ການຄ້າ ແລະ ອຸດສາຫະກຳ	• ໃຫ້ການສະໜັບສະໜູນການຄ້າຂະໜາດຮາກຖານ,ນ້ອຍແລະກາງ ສົ່ງເສີມການປຸ່ງແຕ່ງ ຫັດຖະກຳແລະການຜະລິດເຄື່ອງທີ່ລະນຶກໃຫ້ໄດ້ມາດຕະຖານ ຄຸນນະພາບທີ່ຕະຫລາດທ່ອງທ່ຽວຕ້ອງການ • ຄຸ້ມຄອງລາຄາສະບຽງອາຫານຢ່າງຮັດກຸມໂປ່ງໄສແລະເປັນທຳພາຍແຂວງ-ນະຄອນຫລວງ • ສົ່ງເສີມການຜະລິດພາຍໃນແຂວງ-ນະຄອນຫລວງໃຫ້ຫລາຍຂຶ້ນເປັນຕົ້ນແມ່ນການຜະລິດຂອງປະຊາຊົນເປັນຕົ້ນແມ່ນການປູກຝັງລ້ຽງສັດຫັດຖະກຳແລະເຄື່ອງທີ່ລະນຶກ	• ສ້າງວຽກສ້າງງານແລະສ້າງລາຍໄດ້ໃຫ້ປະຊາຊົນຂັ້ນຮາກຖານ • ຫລຸດຜ່ອນການນຳເຂົ້າທີ່ບໍ່ຈຳເປັນຈາກຕ່າງປະເທດ • ຮັກສາໄວ້ໄດ້ສະຖຽນລະພາບທາງເສດຖະກິດການເງິນພາຍໃນແຂວງ-ນະຄອນຫລວງ • ຊ່ວຍໃຫ້ທຸລະກິດທ່ອງທ່ຽວແລະອຸດສາຫະກຳທ່ອງທ່ຽວສາມາດແຂ່ງຂັນກັບປະເທດໄກ້ແລະໃນພາກພື້ນ
ພ/ນ ແຮງງານແລະສະຫວັດດີການສັງຄົມ	• ສ້າງສູນອົບຮົມວິຊາຊີບຂອງແຂວງ-ນະຄອນຫລວງເພື່ອພັດທະນາຊັບພະຍາກອນມະນຸດໃຫ້ການທ່ອງທ່ຽວແລະອຸດສາຫະກຳທ່ອງທ່ຽວແຂວງ-ນະຄອນຫລວງ • ພາບພັດທະນາສີມືແຮງງານທາງດ້ານປະລິມານແລະຄຸນນະພາບຕອບສະໜອງໃຫ້ທຸລະກິດທ່ອງທ່ຽວແລະອຸດສາຫະກຳທ່ອງທ່ຽວໃຫ້ພຽງພໍ	• ສ້າງວຽກສ້າງງານໃຫ້ໃຫ້ສັງຄົມ • ຍົກລະດັບຄຸນນະພາບການບໍລິການ ລາຍຮັ**ບ** ທຸລະກິດແລະສ່ອນບຸກຄົນດີຂຶ້ນ • ລາຍຮັບແຂວງ-ນະຄອນຫລວງເພີ່ມຂຶ້ນພ້ອມໆກັນໃນລະດັບແນ່ນອນ • ນັກທ່ອງທ່ຽວພໍໃຈໃນລາຄາບໍລິການເຮັດໃຫ້ການທ່ອງທ່ຽວຂະຫຍາຍຕົວໄດ້ເປັນຢ່າງດີພາຍແຂວງ-ນະຄອນຫລວງ
ພ/ນ ໂທລະຄົມມະນາຄົມແລະການສື່ສານ	• ສ້າງເຄືອຂ່າຍຄົມະນາຄົມແລະໄອທີທີ່ສາມາດເຊື່ອມຍຶງຢູ່ພາຍໃນແຂວງ-ນະຄອນ	• ເຮັດໃຫ້ນັກທ່ອງທ່ຽວສາມາດຕິດພົວພັນກັບເພື່ອນ

	ຫລວງໃຫ້ທົ່ວເຖິງສະດວກສະບາຍວອງໄວ	ຄອບຄົວແລະອື່ນໆໄດ້ຢ່າງທັນການແລະຄວາມຕ້ອງການ • ນັກທ່ອງທ່ຽວຈະຊົມໃຊ້ຫລາຍຂຶ້ນອັນເຮັດໃຫ້ລາຍໄດ້ຂອງຂະແໜງການດັ່ງກ່າວດີຂຶ້ນ • ນັກທ່ອງທ່ຽວຈະເດີນທາງໄປສູ່ເຂດຊົນນະບົດຫລາຍຂຶ້ນ
ອົງການສະຫະພັນແມ່ຍິງ	• ສົ່ງເສີມຊຸກຍຸໃຫ້ຜູ້ຍິງເຂົ້າຮ່ວມການຂະບວນພັດທະນາການທ່ອງທ່ຽວຫລາຍຂຶ້ນ • ສົ່ງເສີມຮີດຄອງປະເພນີວັດທະນະທຳອັນດີງາມແລະການນຸ່ງຖືແບບລາວແລະເອກະລັກຂອງທ້ອງຖິ່ນ	• ເພື່ອໃຫ້ມີວຽກງານທຳ ມີຫລາຍໄດ້ຊ່ວຍຄອບຄົວ • ຮັກສາໃວ້ຊຶ່ງມູນເຊື້ອອັນດີງາມຂອງແມ່ຍິງລາວ • ເຮັດໃຫ້ການພັດທະນາຍືນຍົງ
ອົງການຊາວໜຸ່ມ	• ສ້າງຂະບວນການແລະກິດຈະກຳຕ່າງໆ ສົ່ງເສີມການທ່ອງທ່ຽວ • ເຂົ້າຮ່ວມຂະບວນການພັດທະນາທ່ອງທ່ຽວຂັ້ນບ້ານໃນກິດຈະກຳຕ່າງໆ	• ຄວາມເປັນລະບຽບຮຽບຮ້ອຍແລະຄວາມສະຫງົບຂັ້ນບ້ານ • ມີລາຍໄດ້ຈາກການທ່ອງທ່ຽວໃນພື້ນທີ່ • ມີວຽກງານໄດ້ເຮັດ
ເຖົ້າແກ່ແມ່ຍິງຂັ້ນບ້ານ	• ໃຫ້ຂໍ້ມູນທ່ອງທ່ຽວ:ປະຫວັດບ້ານ ທີ່ມາຂອງບ້ານແລະອື່ນໆ • ຖ່າຍທອດບົດຮຽນໃຫ້ຄົນຮຸ່ນຕໍ່ໄປດ້ານວັດທະນະທຳ ປະເພນີປະຕິບັດອັນດີງາມແລະມູນເຊື້ອອື່ນໆຂອງບ້ານ	• ນັກທ່ອງທ່ຽວສົນໃຈ • ການທ່ອງທ່ຽວບ້ານຂະຫຍາຍຕົວ • ຊີວິດການເປັນຢູ່ດີຂຶ້ນ

ເອກະສານຊ້ອນທ້າຍ III

ລາຍຊື່ທຸລະກິດບໍລິການທ່ອງທ່ຽວທີ່ມີສ່ວນກ່ຽວຂ້ອງ

(ສູນກາງ ແລະ ແຂວງ-ນະຄອນຫລວງ)

ຊື່ຂະແໜງທຸລະກິດ	ເຫດຜົນ	ຜົນປະໂຫຍດ
ສະມາຄົມທຸລະກິດນຳທ່ຽວ ແລະບ/ສ ທ່ອງທ່ຽວແລະຂອງສ່ວນບຸກຄົນ	• ສະໜອງລາຍການທ່ອງທ່ຽວແລະບໍລິການນຳທ່ຽວຕາມຄວາມຕ້ອງການ • ດຳເນີນການຕະຫລາດເປົ້າໝາຍ • ຕິດຕໍ່ພົວພັນກັບທຸລະກິດທ່ອງທ່ຽວຕ່າງປະເທດທີ່ສົ່ງອອກ • ໂຄສະນາຂາຍ ການທ່ອງທ່ຽວ • ລົງທຶນພັດທະນາສິ່ງຮອງຮັບນັກທ່ອງທ່ຽວ	• ສ້າງລາຍໄດ້ໃຫ້ທຸລະກິດ • ກະຈ່າຍລາຍຈາຍໃຫ້ສັງຄົມ ແລະທຸລະກິດອື່ນທີ່ກ່ຽວພັນກັບການທ່ອງທ່ຽວ • ສ້າງລາຍຮັບໃຫ້ປະເທດທາງດ້ານເງິນຕາຕ່າງປະເທດ • ການທ່ອງທ່ຽວຂະຫຍາຍຕົວ
ສະມາຄົມທຸລະກິດໂຮງແຮມ-ລີຊອດ-ເຮືອນພັກ ແລະ ຂອງສ່ວນບຸກຄົນ	• ສະໜອງບໍລິການພັກແຮມຕາມຈຸດຕ່າງໆ • ປະກອບສ່ວນໃນຂະບວນກິດຈະກຳທ່ອງທ່ຽວ • ໂຄສະນາການທ່ອງທ່ຽວ ແລະດຳເນີການຕະຫລາດທ່ອງທ່ຽວ	• ສ້າງລາຍໄດ້ໃຫ້ຜູ້ດຳເນີນທຸລະກິດ • ສ້າງວຽກງານແລະລາຍໄດ້ໃຫ້ສັງຄົມ • ສ້າງລາຍໄດ້ໃຫ້ງົບປະມານແຫ່ງຊາດ • ການທ່ອງທ່ຽວຂະຍາຍຕົວ
ສະມາຄົມທຸລະກິດຮ້ານອາຫານ-ກິນດື່ມ-ບັນເທີງ ແລະ ຂອງສ່ວນບຸກຄົນ	• ທຸລະກິດອາຫານກິນດື່ມຕາມເສັ້ນທາງທ່ອງທ່ຽວ • ບັນເທີງຂັ້ນບ້ານເມືອງແລະແຂວງ-ນະຄອນຫລວງທີ່ມີ	• ສ້າງລາຍໄດ້ໃຫ້ທຸລະກິດ ແລະ ຂອງສ່ວນບຸກຄົນ • ສ້າງລາຍຮັບແຫ່ງຊາດ • ສ້າງວຽກສ້າງງາມ

	ລັກສະນະພື້ນເມືອງ ເປັນເອກະລັກຂອງລາວກໍຄືທ້ອງຖິ່ນ • ສາມາດດຶງດູດສິ່ງເສີມການທ່ອງທ່ຽວໄດ້ເປັນຢ່າງດີ ໂດຍສະເພາະແມ່ນອາຫານພື້ນເມືອງທີ່ນັກທ່ອງທ່ຽວຢາກໄດ້ປະສົບການ • ການບັນເທີງມ່ວນຊື່ນຕ້ອງມີລັກສະນະຊາດ ເປັນຂອງພື້ນເມືອງ ມີເອກະລັກລາວ -	• ຊຸກຍູ້ການຜະລິດຂອງປະຊາຊົນ • ສິ່ງເສີມສິລະປະວັນນະຄະດີດ້ວຍຫລາຍຮູບແບບ • ການທ່ອງທ່ຽວຂະຫຍາຍຕົວ
ທຸລະກິດຂົນສົ່ງທາງອາກາດ	• ເຊື່ອມຕໍ່ກັບຕ່າງປະເທດ ນຳເອົານັກທ່ອງທ່ຽວເຂົ້າມາໂດຍກົງ • ຂົນສົ່ງນັກທ່ອງທ່ຽວຈາກແຂວງໜຶ່ງໄປອີກແຂວງໜຶ່ງ ໃນເວລາອັນສັ້ນໆ • ສາມາດເຮັດໃຫ້ການທ່ອງທ່ຽວຂະຫຍາຍຕົວໄດ້ເປັນຢ່າງດີ	• ປະກອບສ່ວນຂັບເຄື່ອນເສດຖະກິດສັງຄົມຂອງປະເທດໂດຍນຳເອົານັກທ່ອງທ່ຽວຕ່າງປະເທດເຂົ້າມາໄດ້ເປັນຈຳນວນຫລາຍ • ສ້າງລາຍຮັບແຫ່ງຊາດ
ທຸລະກິດຂົນສົ່ງທາງນ້ຳ ແລະ ເຮືອນຳທ່ຽວ	• ເປັນພາຫານະໜຶ່ງທີ່ນັກທ່ອງທ່ຽວຕາມແມ່ນ້ຳຂອງຫ້ວຍນ້ຳລຳເຊ • ສ້າງຄວາມປະທັບໃຈໃຫ້ນັກທ່ອງທ່ຽວທີ່ໄດ້ສຳພັດກັບທຳມະຊາດ	• ສ້າງລາຍໄດ້ໃຫ້ປະຊາຊົນ • ດຶງດູດນັກທ່ອງທ່ຽວສ້າງລາຍຮັບໃຫ້ທ້ອງຖິ່ນ
ສະມາຄົມຂົນສົ່ງທາງບົກ ແລະ ຂອງ	• ປະເພດລົດຕຸ້ ລົດເກ່ງ ລົດ	• ສ້າງລາຍໄດ້ໃຫ້ຜູ້ປະກອບ

ສ່ວນບຸກຄົນ	ຈັກ ແລະ ລົດຖີບ... • ປະເພດສັດ:ຊ້າງ ມ້າ ກວາງ ...	ການໃນພື້ນທີ່ພັດທະນາສິ່ງເສີມການທ່ອງທ່ຽວ • ສ້າງລາຍໄດ້ໃຫ້ປະຊາຊົນໃນພື້ນທີ່ • ນັກທ່ອງທ່ຽວເພີ່ມຂຶ້ນ
ສະມາຄົມທຸລະກິດຫັດຖະກຳຕ່ຳແຜ່ນພື້ນເມືອງລາວ ແລະ ເຄື່ອງທີ່ລະນຶກຂອງສ່ວນບຸກຄົນ	• ເປັນສິ່ງທີ່ນັກທ່ອງທ່ຽວຊື້ເປັນຂອງຕ້ອນເພື່ອນແລະຍາດຕິພີ່ນ້ອງທີ່ບໍ່ໄດ້ມາທ່ຽວ • ເປັນການໂຄສະນາການທ່ອງທ່ຽວຂອງປະເທດໃນຮູບອີກແບບໜຶ່ງແລະສ້າງຄວາມສົນໃຈໃຫ້ຜູ້ທີ່ຍັງບໍ່ໄດ້ມາ	• ສ້າງວຽກງານໃຫ້ຊຸມຊົນແລະລາຍໄດ້ໃຫ້ຜູ້ຍິງໄດ້ຊ່ວຍຄອບຄົວ • ຮັກສາໃຊ້ໄດ້ມູນເຊື້ອແລະເອກະລັກຄວາມເປັນລາວ • ສ້າງລາຍໄດ້ດ້ານເງິນຕາເຂົ້າປະເທດໄດ້ເປັນຢ່າງດີ
ສະມາຄົມພ/ງນຳທ່ຽວ ແລະ ສ່ວນບຸກຄົນ	• ເປັນບຸກຄະລະກອນທີ່ນັກທ່ອງທ່ຽວຕ້ອງການເພື່ອພາທ່ຽວຕາມສະຖານທີ່ທ່ອງທ່ຽວຕ່າງໆ • ຜູ້ຮູ້ດີຄວາມຕ້ອງການຂອງນັກທ່ອງທ່ຽວແລະສາມາດໂຄສະນາຊັກຊວນໃຫ້ນັກທ່ອງທ່ຽວທີ່ມາແລ້ວໃຫ້ຄືນມາອີກ • ສ້າງຄວາມສົນໃຈໃຫ້ນັກທ່ອງທ່ຽວໃນດ້ານຕ່າງໆ	• ດຶງດູດນັກທ່ອງທ່ຽວ • ສ້າງພາບພົດຂອງປະເທດແລະຄວາມປະທັບໃຈໃຫ້ນັກທ່ອງທ່ຽວຊຶ່ງມີຜົນດີນາໆປະການຕາມມາພາຍຫລັງ
ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ	• ຮ່ວມມືກັນແກ້ໄຂອຸປະສັກຕ່າງໆດ້ານເສດຖະກິດ ການຄ້າ ແລະ ການບໍລິການແລະອຸປະສັກອື່ນໆເພື່ອສົ່ງເສີມ	• ເພີ່ມທະວີລາຍໄດ້ໃຫ້ປະເທດ • ສ້າງລາຍໄດ້ໃຫ້ທຸລະກິດທ່ອງທ່ຽວ ໂຮງແຮມ ອາ

	ການທ່ອງທ່ຽວຂອງປະເທດ	ຫານ ສະຖານທີ່ທ່ອງທ່ຽວ ແລະ ອື່ນໆ • ສ້າງວຽກສ້າງງານ • ດຶງດູດການລົງທຶນ
ສະຖານທີ່ທ່ອງທ່ຽວຕ່າງໆຂອງສ່ວນບຸກຄົນ	• ເປັນປາຍທາງຂອງນັກທ່ອງທ່ຽວໃນຮູບການພັກແວ່ຊົມທຳມະຊາດຫລືເຂົ້າຮ່ວມກິດຈະກຳວັດທະນະທຳ ແລະ ອື່ນໆ	• ຍິ່ງມີຫລາຍຍິ່ງເຮັດໃຫ້ນັກທ່ອງທ່ຽວໄດ້ທ່ຽວຢູ່ປະເທດເຮົາເປັນຫລາຍມື້ຊຶ່ງເຮັດໃຫ້ລາຍຈ່າຍຂອງນັກທ່ອງທ່ຽວຫລາຍຂຶ້ນ
ຫ້ອໜ່ວຍທຸລະກິດບໍລິການຍ່ອຍໃນສ່ວນບຸກຄົນ(ຈັບຈ່ອງປີ້ຍົນ ຂົນສົ່ງ ໂຮງແຮມ ລົດໃຫ້ເຊົ່າ-ລົດຈັກ-ລົດຖີບ ແລະອື່ນໆ)	• ເປັນພາກສ່ວນໜຶ່ງທີ່ມີຄວາມສຳຄັນເນື່ອງຈາກວ່າເປັນຫ້ອໜ່ວຍທີ່ອຳໜ່ວຍຄວາມສະດວກໃຫ້ນັກທ່ອທ່ຽວ • ເປັນທຸລະກິດຂະໜາດນ້ອຍທີ່ສາມາດຈັດຕັ້ງໄດ້ຢູ່ຕາມສະຖານທີ່ທ່ອງທ່ຽວຕ່າງໆ ແລະບໍ່ຕ້ອງການລົງທຶນສູງ	• ສ້າງລາຍໄດ້ໃຫ້ນັກທຸລະກິດບໍລິການຂະໜາດນ້ອຍຢູ່ທ້ອງຖິ່ນແລະສະຖານທີ່ທ່ອງທ່ຽວຕ່າງໆ • ຕອບສະໜອງ ຄວາມຕ້ອງການນັກທ່ອງທ່ຽວໄດ້ເປັນຢ່າງດີ • ເປັນໂອກາດໃຫ້ຄົນລາວມີທຸລະກິດ ມີງານເຮັດ ມີລາຍໄດ້ແລະອື່ນໆ
ທຸລະກິດໄປສະນີ ໂທລະຄົມມະນາຄົມແລະການສື່ສານ	• ເປັນລະບົບການສື່ສານທີ່ນັກທ່ອງທ່ຽວໃຊ້ຢ່າງກວ້າງຂວາງເພື່ອຕິດຕໍ່ສົ່ງຂ່າວໃຫ້ເພື່ອນແລະຍາດຕິພີ່ນ້ອງແລະອື່ນໆ	• ສ້າງລາຍໄດ້ໃຫ້ທຸລະກິດຂະຫຍາຍຕະໜ່າງເຄືອຂ່າຍ • ອຳນວຍຄວາມສະດວກໃຫ້ນັກທ່ອງທ່ຽວໃນການເດີນທາງ ແລະພັກເຊົ່າຢູ່ເຂດຊົນນະບົດຫ່າງໄກຊອກຫລີກ • ສ້າງຄວາມໝັ້ນໃຈໃຫ້ນັກທ່ອງທ່ຽວໃນການເດີນທາງ • ຈຳນວນນັກທ່ອງທ່ຽວເພີ່ມຂຶ້ນ

ທຸລະກິດບໍລິການສະຖານທີ່ຈອດລົດ ກາຣາອານແລະແຄມປິ້ງ	• ນັກທ່ອງທ່ຽວທີ່ນຳລົດສ່ວນ ຕົວເຂົ້າມາທ່ຽວ ສປປລາວ ມີຄວາມຕ້ອງ ການບ່ອນຈອດລົດພັກແຮມ ແລະເຮັດແຄມປິ້ງຕາມເສັ້ນ ທາງທ່ອງທ່ຽວພາຍໃນ ສປ ປລາວ ແລະເດີນທາງເຊື່ອມ ຕໍ່ກັບປະເທດໄກ້ຄຽງ	• ເພີ່ມຈຳນວນນັກທ່ອງທ່ຽວ • ສ້າງລາຍໄດ້ໃຫ້ທຸລະກິດ • ສ້າງລາຍຮັບແຫ່ງຊາດແລະ ທ້ອງຖິ່ນ
ບັນດາທະນາຄານການຄ້າ ແລະ ຫົວ ໜ່ວຍບໍລິການການເງິນຕ່າງໆ	• ການໃຊບັດເຄຣດິດ(credit card)ປະເພດ)ຕ່າງໆໃຫ້ສະ ດວກວອງໄວຫລາກຫລາຍ ຢູ່ແຂວງ-ນະຄອນຫລວງ ແລະເມືອງຕ່າງໆໃນປະເທດ • ອຳນວຍໃຫ້ນັກທ່ອງທ່ຽວ ໃນການເດີນທາງທ່ອງທ່ຽວ ແລະບໍ່ຕ້ອງຖືເງິນສົດຕິດຕົວ ຈຳນວນຫລາຍ • ທຸລະກິດແລະການບໍລິການ ຂອງປະຊາຊົນສາມາດເຂົ້າ ເຖິງທຶນໄດ້ສະດວກໄວ ແລະຫລາຍຂຶ້ນ	• ທຸລະກິດຈະມີຫລາຍໄດ້ ເພີ່ມຈາກການໍລິການ • ນັກທ່ອງທ່ຽວຈະມີຄວາມ ປອດໄພຫລາຍຂຶ້ນທາງດ້ານ ການເງິນແລະການໃຊ້ • ຂັບເຄື່ອນເສດຖະກິດໄດ້ດີ ໃນເຂດຊົນນະບົດ • ຈຳນວນນັກທ່ອງທ່ຽວຈະ ພັກເຊົ່າຢູ່ລາວເປັນຫລາຍ ວັນກໍໄດ້